# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສໍານັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

18 - 24 ຕຸລາ 2023
ປີທີ 12
ສະບັບທີ 942
ລາຍສັປະດາ


# ຄະນະລັດຖະບານ ແລະ ຄະນະປະຈໍາສະພາແຫ່ງຊາດ ປຶກສາຫາລືບັນຫາສໍາຄັນຂອງຊາດ




(ສພຊ) ເພື່ອປຶກສາຫາລື ບັນຫາສໍາຄັນ ແລະ ຮີບດ່ວນຂອງສັງຄົມໃຫ້ມີຄວາມເປັນເອກະພາບ ແລະ ຊີ້ນໍາບັນດາກະຊວງ, ອົງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສໍາເລັດ ແລະ ທັນເວລານັ້ນ, ກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈໍາສະພາແຫ່ງຊາດ ແລະ ຄະນະລັດຖະບານ ຄັ້ງທີ II ປະຈໍາປີ 2023 ໄດ້ດໍາເນີນຂຶ້ນ ໃນວັນທີ 12 ຕຸລາ 2023 ຢູ່ທີ່ຫໍປະຊຸມແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ສອນໄຊ ສີພັນດອນ ກໍາມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ທ່ານ ປອ. ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈໍາສະພາແຫ່ງຊາດ, ບັນດາຮອງນາຍົກລັດຖະມົນຕີ, ບັນດາກໍາມະການຄະນະປະຈໍາສະພາແຫ່ງຊາດ, ຄະນະລັດຖະບານ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ.

ໃນກອງປະຊຸມ ໄດ້ຄົ້ນຄວ້າປຶກສາຫາລືບັນຫາສໍາຄັນຕ່າງໆຂອງຊາດ ເປັນຕົ້ນ: (1) ບົດລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາໃນໄລຍະ 9 ເດືອນຕົ້ນປີ, ຄາດຄະເນໝົດປີ 2023, ທິດທາງແຜນການ 3 ເດືອນທ້າຍປີ 2023 ແລະ ສະເໜີທິດທາງແຜນການໃນປີ 2024; ແຜນຈຸດສຸມໂຄງການລົງທຶນຂອງລັດ ປີ 2024 ແລະ ສະເໜີບັນຊີໂຄງການຕ້ານຕາຝັ່ງເຈື່ອນ ແລະ ໂຄງການສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງແຂວງທີ່ເປັນບຸລິມະສິດໃນປີ 2024; (2) ບົດລາຍງານຜົນສໍາເລັດທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ສະເໜີແຜນວຽກຈຸດສຸມໃນຕໍ່ໜ້າ; (3) ບົດລາຍງານຜົນສໍາເລັດພົ້ນເດັ່ນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາ ແລະ ສະເໜີແຜນວຽກຈຸດສຸມໃນຕໍ່ໜ້າ. (4) ບົດລາຍງານການແກ້ໄຂຄວາມຫຍຸ້ງຍາກທາງດ້ານ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ




ຕິດຕາມກວດກາການຈັດຕັ້ງ... (ໜ້າ 3)



ຕິດຕາມກວດກາຄ້າຍຄຸມຂັງ... (ໜ້າ 4)




ມາດຕະການກໍາຈັດມົນລະພິດ... (ໜ້າ 12)


# ຄະນະປະຈໍາສະພາແຫ່ງຊາດ ເປີດກອງປະຊຸມຮ່ວມກັບ 3 ພາກສ່ວນ



(ສພຊ) ໃນວັນທີ 13 ຕຸລາ 2023 ຢູ່ທີ່ຫໍສະພາແຫ່ງຊາດ ໄດ້ດໍາເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈໍາສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານຄະນະປະຈໍາສະພາແຫ່ງຊາດ, ທ່ານ ປອ. ສິນລະວົງ ຄຸດໄພທູນ ກໍາມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈໍາສະພາແຫ່ງຊາດ, ບັນດາກໍາມະການຄະນະປະຈໍາ

ອ່ານຕໍ່ໜ້າ 2

# ກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈໍາສະພາແຫ່ງຊາດ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ

(ສພຊ) ເພື່ອສ້າງຄວາມເປັນເອກະພາບລະຫວ່າງຄະນະປະຈໍາສະພາແຫ່ງຊາດ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການແກ້ໄຂບັນຫາຕ່າງໆ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທໍາມະນູນ ແລະ ກົດໝາຍ; ດັ່ງນັ້ນ, ຈຶ່ງມີກອງປະຊຸມຮ່ວມ ໃນວັນທີ 13 ຕຸລາ 2023 ທີ່ຫໍສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ກັບທ່ານນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ ແລະ ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການສູງສຸດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈໍາສະພາແຫ່ງຊາດ,



ບັນດາກໍາມະການຄະນະປະຈໍາສະພາແຫ່ງຊາດ ແລະ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານການປະຕິບັດ,

ອ່ານຕໍ່ໜ້າ 3

# ສພຊ ຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6

(ສພຊ) ເພື່ອເປັນການຮັບປະກັນໃຫ້ບັນດາເນື້ອໃນທີ່ຈະນໍາສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ຮັບການຄົ້ນຄວ້າ ປະກອບຄໍາຄິດຄໍາເຫັນຈາກບັນດາສະມາຊິກສະພາແຫ່ງຊາດ ແລະ ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ; ຍົກສູງປະສິດທິພາບໃນການກະກຽມ ແລະ ດໍາເນີນກອງປະຊຸມ



ສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ແນໃສ່ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເນື້ອໃນກອງປະຊຸມມີຄຸນນະພາບ, ຮັບປະກັນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ເພື່ອເຮັດໃຫ້ບັນດາກະຊວງ, ອົງການຂະແໜງການ ແລະ ສະມາຊິກສະພາແຫ່ງຊາດ ໄດ້ແລກປ່ຽນຄໍາຄິດຄໍາເຫັນ ແລະ ເຂົ້າໃຈເປັນເອກະພາບຕໍ່ບັນດາເນື້ອໃນບົດລາຍງານ ແລະ ກົດໝາຍທີ່ມີ

ອ່ານຕໍ່ໜ້າ 4

# ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍຂົງເຂດປ້ອງກັນຄວາມສະຫງົບ



(ສພຊ) ກອງປະຊຸມສະຫຼຸບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຄວາມສະຫງົບ 1 ສະບັບ ເພື່ອປັບປຸງເນື້ອໃນກົດໝາຍໃຫ້ມີຄວາມລະອຽດ, ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງກໍາລັງປ້ອງກັນຄວາມສະຫງົບໃນປັດຈຸບັນ, ໃນວັນທີ 11 ຕຸລາ 2023 ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີທ່ານ ພົທ. ກົງທອງ ພົງວິຈິດ ກໍາມະການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ມີບັນດາທ່ານກໍາມາທິການຂອງສະພາແຫ່ງຊາດ, ຮອງຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ, ສໍານັກງານນາຍົກລັດຖະມົນຕີ, ອົງການກວດກາແຫ່ງລັດ, ຮອງລັດຖະມົນຕີກະຊວງຍຸຕິທໍາ,

ອ່ານຕໍ່ໜ້າ 3

## ຄະນະລັດຖະບານ...

(ຕໍ່ຈາກໜ້າ 1)

ເສດຖະກິດ ໃນໄລຍະ 3 ເດືອນ ແລະ ສະເໜີທິດທາງມາດຕະການແຕ່ນີ້ຮອດໝົດປີ 2023; (4) ບົດລາຍງານການຈັດຕັ້ງປະຕິບັດໂຄງການສຳປະທານຕ່າງໆ ໃນໄລຍະຜ່ານມາ ແລະ ສະເໜີທິດທາງມາດຕະການໃນການຄຸ້ມຄອງໃນຕໍ່ໜ້າ ລວມທັງການສະເໜີການແບ່ງຂັ້ນໃນການອະນຸມັດ ແລະ ຄຸ້ມຄອງໂຄງການສຳປະທານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນໃນຕໍ່ໜ້າ; ບົດລາຍງານແຜນການສ້າງ ແລະ ປັບປຸງກົດໝາຍໃນໄລຍະແຕ່ປີ 2024-2025, ປຶກສາຫາລືວາລະທີ່ຕິດພັນກັບຄວາມຮັບຜິດຊອບຂອງລັດຖະບານ ທີ່ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະຫຼຸບຕີລາຄາກົນໄກປະສານງານ ລະຫວ່າງ ລັດຖະບານ ແລະ ສະພາແຫ່ງຊາດ ໃນໄລຍະຜ່ານມາ ແລະ ທິດທາງປັບປຸງໃນຕໍ່ໜ້າ.




## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ, ລັດຖະມົນຕີກະຊວງພາຍໃນ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ, ຮອງປະທານສູນກາງສະຫະພັນກຳມະບານລາວ, ທ່ານຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ຮອງປະທານສູນກາງສະຫະພັນແມ່ຍິງລາວ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານການຍົກສູງຄຸນນະພາບການປະຕິບັດສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ກ່ຽວກັບການຕິດຕາມກວດກາການເຄື່ອນໄຫວຂອງສະພາແຫ່ງຊາດ.

ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ໃສ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.



## ຮອງປະທານສະພາແຫ່ງຊາດ ມອບເຂົ້າສານ ໃຫ້ສະພາປະຊາຊົນແຂວງບໍລິຄຳໄຊ




(ສພຊ) ໃນໂອກາດທີ່ເດີນທາງເຂົ້າຮ່ວມ ແລະ ເປັນປະທານກອງປະຊຸມເຝິກອົບຮົມຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ 3 ແຂວງພາກເໜືອຄື: ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ ກ່ຽວກັບການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບ ທີ່ຈັດຂຶ້ນໃນລະຫວ່າງວັນທີ 8-9 ຕຸລາຜ່ານມາ, ກ່ອນໜ້ານັ້ນ ໃນວັນທີ 7 ຕຸລາ 2023 ທີ່ສະພາປະຊາຊົນແຂວງບໍລິຄຳໄຊ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ນຳເອົາເຂົ້າສານຈຳນວນ 200 ຖົງ (1ໂຕນ) ມູນຄ່າ 18 ລ້ານກວ່າກີບ ມອບໃຫ້ສະພາປະຊາຊົນແຂວງບໍລິຄຳໄຊ ເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ທຸກຍາກຢູ່ແຂວງບໍລິຄຳໄຊ ໂດຍການກ່າວຮັບຂອງທ່ານ ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ, ມີບັນດາຄະນະຕິດຕາມ ແລະ ພະນັກງານຫຼັກແຫຼ່ງຂອງສະພາປະຊາຊົນແຂວງບໍລິຄຳໄຊເຂົ້າຮ່ວມເປັນສັກຂີພິຍານ ເຊິ່ງເຂົ້າສານທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ບໍແບ່ງມາຈາກການສະໜັບສະໜູນຂອງບໍລິສັດ ວິຄອມ ເທັກໂນໂລຢີ ຈຳກັດຜູ້ດຽວ.

**(ສອນສັກ ວັນວິໄຊ)**

## ເລື່ອງເດັ່ນ ຂ່າວເດັດ

***# ຄັດໂດຍ: ທອມສະນິດ***

*❒ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງວິດີໂອສຳລັບການພັດທະນາຄູຕອນໃໝ່ ກ່ຽວກັບ 7 ວິທີການ ເພື່ອສ້າງຄວາມເຊື່ອໝັ້ນໃນການສອນພາສາອັງກິດ ເຊິ່ງວິດີໂອດັ່ງກ່າວ ຜະລິດໂດຍທີມງານຂະແໜງສື່ເອເລັກໂຕຣນິກແລະການສຶກສາທາງໄກ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ວິດີໂອນີ້, ໄດ້ອອກອາກາດທາງຊ່ອງໂທລະພາບການສຶກສາ ແລະ ກິລາ (Lao ESTV) ຊ່ອງ 8 ທາງດາວທຽມລາວແຊັດ, ແພລັດ ຟອມຄັງປັນຍາລາວ ແລະ ທາງຊ່ອງ YouTube: ວິດີໂອສຳລັບການພັດທະນາຄູ Teacher Development Videos. 39 ເພື່ອກົດຮັບຊົມວິດີໂອ:https://www.youtube.com/watch?v=F0hopPiXLWY*

***ໜສພ. ປະເທດລາວ 27/09/2023***

*❒ ມາຮອດວັນທີ 15 ຕຸລາ 2023 ມີຜູ້ຕິດເຊື້ອໄຂ້ຍຸງລາຍສະສົມ 30.751 ກໍລະນີ ເສຍຊີວິດສະສົມ 18 ຄົນ; ໃນນັ້ນ, ອຸດົມໄຊ ຕິດເຊື້ອສະສົມ 5.290 ກໍລະນີເສຍຊີວິດ 1 ຄົນ, ນະຄອນຫຼວງວຽງຈັນ 4.621 ກໍລະນີ ເສຍຊີວິດ 2 ຄົນ, ຄຳມ່ວນ 3.738 ກໍລະນີ ເສຍຊີວິດ 1 ຄົນ, ຫຼວງພະບາງ 3.327 ກໍລະນີ, ສະຫວັນນະເຂດ 3.332 ກໍລະນີ ເສຍຊີວິດ 2 ຄົນ, ໄຊຍະບູລີ 1.990 ກໍລະນີ ເສຍຊີວິດ 2 ຄົນ, ວຽງຈັນ 1.571 ກໍລະນີເສຍຊີວິດ 3 ກໍລະນີ, ບໍລິຄຳໄຊ 1.481 ກໍລະນີ ເສຍຊີວິດ 5 ຄົນ, ຫຼວງນ້ຳທາ 1.469 ກໍລະນີ, ອັດຕະປື 878 ກໍລະນີ ເສຍຊີວິດ 2 ຄົນ, ບໍ່ແກ້ວ 870 ກໍລະນີ, ສາລະວັນ 809 ກໍລະນີ, ຈຳປາສັກ 735 ກໍລະນີ, ຜົ້ງສາລີ 310 ກໍລະນີ, ເຊກອງ 209 ກໍລະນີ, ຊຽງຂວາງ 75 ກໍລະນີ, ໄຊສົມບູນ 40 ກໍລະນີ ແລະ ຫົວພັນ 6 ກໍລະນີ.*

***ໜສພ. ວຽງຈັນໃໝ່ 17/10/2023***

*❒ ລັດຖະບານ ແຫ່ງ ສປປ ລາວ ແລະ ອົງການອຸຍນິເຊັບ ໄດ້ຢືນຢັນຄືນເຖິງຄວາມມຸ່ງໝັ້ນຂອງທັງສອງຝ່າຍ ເພື່ອຮັບປະກັນການເຂົ້າເຖິງການລ້າງມືແລະ ສຸຂະອະນາໄມທີ່ດີສຳລັບທຸກຄົນ ໃນໂອກາດວັນລ້າງມືສາກົນ ເພື່ອເປັນຂີດໝາຍຄົບຮອບ 50 ປີ ຂອງການຮ່ວມມືລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ອົງການອຸຍນິເຊັບ. ວັນລ້າງມືສາກົນແມ່ນໄດ້ສະເຫຼີມສະຫຼອງ ໃນວັນທີ 15 ຕຸລາຂອງທຸກປີ ໂດຍມີຈຸດປະສົງເພື່ອສ້າງຄວາມເຂົ້າໃຈກ່ຽວກັບບົດບາດອັນສຳຄັນຂອງການລ້າງມື ໃນການປ້ອງກັນພະຍາດ ແລະ ຮັກສາຊີວິດ ເຊິ່ງຫົວຂໍ້ຂອງວັນລ້າງມືສາກົນປີນີ້ແມ່ນ "ມືທີ່ສະອາດສຳລັບທຸກຄົນ" ທີ່ໄດ້ເນັ້ນໜັກໃສ່ສິດທິຂອງທຸກຄົນໂດຍສະເພາະເດັກນ້ອຍໃນການເຂົ້າເຖິງນ້ຳສະອາດ ແລະ ສິ່ງອຳນວຍຄວາມສະດວກດ້ານສຂະອະນາໄມ; ເມື່ອບໍ່ດົນມານີ້, ແຂວງບໍລິຄຳໄຊ ໄດ້ກາຍເປັນແຂວງທຳອິດໃນ ສປປ ລາວ ທີ່ໄດ້ຢຸດຕິການຖ່າຍແບບຊະຊາຍ ແລະ ຫຼັງຈາກນັ້ນບໍ່ດົນ, ນະຄອນຫຼວງວຽງຈັນກໍໄດ້ຖືກແຕ່ງຕັ້ງເປັນນະຄອນຫຼວງສຸຂະອະນາໄມທຳອິດຂອງອາຊຽນ.*

***ໜສພ. ປະເທດລາວ 17/10/2023***

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ ໃນການແນະນຳ ແລະ ກວດກາຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ໃນການດຳເນີນຄະດີຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ; ຮັບຟັງການລາຍງານການປະຕິບັດ, ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນສູງສຸດ ໃນການກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.





ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ໃສ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ກຸກກິກ ບຸດດາໄຊ)**

## ຕິດຕາມກວດກາ...

(ຕໍ່ຈາກໜ້າ 1)

ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ຄະນະສະມາຊິກສະພາແຫ່ງຊາດ, ຄະນະກຳມະການ ປກຊ-ປກສ ຂອງສະພາປະຊາຊົນຂັ້ນແຂວງ ຈາກ 17 ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງອ້ອມຂ້າງກະຊວງເຂົ້າຮ່ວມ.

ກອງປະຊຸມ, ທ່ານ ພົຕ. ຄຳກົ່ງ ຜຸຍຫຼ້າມະນີວົງ ຮອງລັດຖະມົນກະຊວງປ້ອງກັນຄວາມສະຫງົບ, ຫົວໜ້າຄະນະປະເມີນກົດໝາຍ ຂອງກະຊວງປ້ອງກັນຄວາມສະຫງົບ ໄດ້ກ່າວວ່າ: ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໄດ້ຮັບຮອງໂດຍສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 2 ກໍລະກົດ 2007 ແລະ ມີການປັບປຸງໜຶ່ງຄັ້ງ ໃນປີ 2017, ສ່ວນສະບັບປັງປຸງປີ 2017 ມີພາກ, ໝວດ ແລະ ມາດຕາ ທີ່ຂຶ້ນກັບ ປະກອບມີ 9 ພາກ, 6 ໝວດ ແລະ 55 ມາດຕາ ເຊິ່ງກົດໝາຍສະບັບນີ້ໄດ້ກຳນົດທີ່ຕັ້ງ, ພະລະບົດບາດ, ສິດ ແລະ ໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບ ແລະ ເພື່ອຕອບສະໜອງໄດ້ຕາມຄວາມຮຽກຮ້ອງໃນຕໍ່ໜ້າທີ່ເຫັນວ່າມີຄວາມຈຳເປັນ ຍ້ອນສະພາບການຈັດຕັ້ງປະຕິບັດວຽກງານໃນປັດຈຸບັນຂອງກຳລັງປ້ອງກັນຄວາມສະຫງົບ ແມ່ນມີບາງເນື້ອໃນຄວນປັບປຸງໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.

ໃນພິທີ, ພົທ. ສຸວອນ ເລື່ອງບຸນມີ ຍັງໄດ້ກ່າວວ່າ: ກອງປະຊຸມຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດໜົດໝາຍຂົງເຂດປ້ອງກັນຄວາມສະຫງົບຄັ້ງນີ້, ແມ່ນໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນໃສ່ກົດໝາຍ 1 ສະບັບ ໃນຂົງເຂດປ້ອງກັນຄວາມສະຫງົບ ກໍຄືກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ), ເຊິ່ງເປັນການປະເມີນ ແລະ ຕີລາຄາໃນການຈັດຕັ້ງປະຕິບັດຕົວຈິງ ອາດຈະມີຫຼາຍມາດຕາທີ່ຍັງບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງແລະບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານປ້ອງກັນຄວາມສະຫງົບໃນໄລຍະໃໝ່ ຄືການຈັດຕັ້ງຕົວຈິງຍັງບໍ່ທັນເຂັ້ມງວດເດັດຂາດ, ບໍ່ສັກສິດ ຈຶ່ງໄດ້ດຳເນີນການປະເມີນຊອກໃຫ້ເຫັນຂໍ້ສະດວກ, ຜົນສັກສິດ, ຄວາມສອດຄ່ອງຂອງກົດໝາຍລວມທັງຂໍ້ຄົງຄ້າງທີ່ມີຄວາມຫຍຸ້ງຍາກ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ເພື່ອກ້າວໄປເຖິງການຄົ້ນຄວ້າປັບປຸງໃຫ້ດີຂຶ້ນກວ່າເກົ່າ ແນ່ໃສ່ເຮັດໃຫ້ການຄຸ້ມຄອງຕິດຕາມກວດກາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບດ້ວຍກົດໝາຍໃຫ້ມີຄວາມສັກສິດເຂັ້ມງວດຫຼາຍຂຶ້ນ, ຜົນຂອງການປະເມີນກົດໝາຍໃນຂົງເຂດວຽກງານປ້ອງກັນຄວາມສະຫງົບຄັ້ງນີ້, ຈະນຳເຂົ້າຜ່ານຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດກ່ອນ ເພື່ອຈະໄດ້ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນລະຫວ່າງທ້າຍເດືອນຕຸລາທີ່ຈະມາເຖິງນີ້.

**(ສອນສັກ ວັນວິໄຊ)**



# ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ໃນຂົງເຂດກຳມາທິການແຜນການ, ການເງິນ ການກວດສອບ

(ສພຊ) ເພື່ອເປັນການສ້າງຄວາມເຂັ້ມແຂງ, ບົດຮຽນໃນການຕິດຕາມກວດກາ, ການປຶກສາຫາລືແຜນການຄົ້ນຄວ້າການຕິດຕາມກວດກາ, ເພື່ອເປັນການຮຽນຮູ້ວິທີການ ແລະ ກົນໄກໃນການຕິດຕາມກວດກາເກັບກຳຂໍ້ມູນປະເມີນຜົນ ແລະ ເພື່ອຍາດແຍ່ງເອົາບົດຮຽນ ແລະ ປະສົບການຈາກພາຍໃນ ແລະ ຕ່າງປະເທດ ຂອງການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ ໃຫ້ແກ່ພະນັກງານວິຊາການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ກຳມະການຂອງສະພາປະຊາຊົນແຂວງ, ໃນລະຫວ່າງວັນທີ 13-14 ຕຸລາ 2023 ທີ່ເມືອງວຽງຄຳ ແຂວງວຽງຈັນ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ໃນຂົງເຂດກຳມາທິການແຜນການ, ການເງິນ ແລະການກວດສອບ ໂດຍການເປັນປະທານຂອງທ່ານ ບຸນຕາ ເທບພະວົງ ຮອງປະທານກຳມາທິການແຜນການ, ການເງິນ ແລະການກວດສອບ ໂດຍການເຂົ້າຮ່ວມຂອງທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນຄະນະກຳມະການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ຈາກ 18 ແຂວງ ທົ່ວປະເທດ (ຜ່ານທາງອອນລາຍ) ແລະ ບັນດາທ່ານຊ່ຽວຊານ-ນັກຄົ້ນຄວ້າ, ບັນດາທ່ານຫົວໜ້າ-ຮອງຫົວໜ້າກົມພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.



ກອງປະຊຸມ ໄດ້ຮັບຟັງການສະເໜີແຜນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການພັດທະນາຖານຂໍ້ມູນ 5 ປີ ຄັ້ງທີ IX (2021-2025); ແຜນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບ ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ກວດສອບ ແລະ ກວດກາ 5 ປີ ຄັ້ງທີ IX (2021-2025); ແຜນການເຄື່ອນໄຫວການສ້າງ ແລະ ເຊື່ອມໂຍງຖານຂໍ້ມູນຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ໃນການປະເມີນຜົນກາງສະໄໝ ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025); ແຜນການເຄື່ອນໄຫວແລະສ້າງ ແລະ ເຊື່ອມໂຍງຖານຂໍ້ມູນຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບໃນການປະເມີນຜົນກາງສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025); ການປະກອບຄຳເຫັນໃສ່ແຜນການຕິດຕາມກວດກາ, ວິທີວິທະຍາການປະເມີນຜົນ ແລະ ການພັດທະນາຖານຂໍ້ມູນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ, ແຜນເງິນຕາ, ກວດສອບ ແລະ ກວດກາກັບພາກສ່ວນກ່ຽວຂ້ອງຈາກຕາງໜ້າ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນສະຖິຕິແຫ່ງຊາດ ແລະ ບັນດາແຂວງ; ການສະເໜີບົດລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025), ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (2021-2023) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 9 ເດືອນ ແລະ ຄາດຄະເນໝົດປີ 2023; ບົດລາຍງານແຜນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນງົບປະມານແຫ່ງລັດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025) ແລະ ແຜນງົບປະມານແຫ່ງລັດ 9 ເດືອນແລະຄາດຄະເນປີ2023 ຈາກຕາງໜ້າກະຊວງການເງິນ; ບົດລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບ ແຜນເງິນຕາກາງສະໄໝ 5 ປີ ຄັ້ງທີ IX (2021-2025), ແຜນເງິນຕາ 9 ເດືອນ ແລະ ຄາດຄະເນໝົດປີ 2023 ຈາກຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ລາຍງານຜົນການກວດກາຕາມຜົນການກວດສອບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນງົບປະມານແຫ່ງລັດ ປະຈຳປີ 2022, ການກວດສອບມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ການແກ້ໄຂຜົນການກວດສອບຕາມມະຕິກອງປະຊຸມສະພາແຫ່ງຊາດ ຈາກຕາງໜ້າອົງການກວດສອບແຫ່ງລັດ ແລະ ການສະເໜີລາຍງານຜົນການກວດກາຕາມຜົນການກວດສອບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນການກວດກາປະຈຳປີ 2023 ແລະ ການແກ້ໄຂຜົນການກວດກາ ຕາມມະຕິກອງປະຊຸມສະພາແຫ່ງຊາດ; ຈາກນັ້ນ, ຜູ້ແທນກອງປະຊຸມ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ຕ່າງໆທີ່ນຳມາສະເໜີ ແລະ ຕາມຄຳເຫັນເຈາະຈີ້ມຂອງປະທານກອງປະຊຸມໃນກອງປະຊຸມຄັ້ງນີ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທຶນຈາກໂຄງການ STEPS.

**(ສອນສັກ ວັນວິໄຊ)**



## ສພຊ ຍົກສູງ...

(ຕໍ່ຈາກໜ້າ 1)

ລັກສະນະວິຊາການ, ຮັບປະກັນການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍກຳນົດ. ໃນລະຫວ່າງວັນທີ 16 ຕຸລາ 2023 ທີ່ສູນຮ່ວມມືສາກົນ ແລະ ເຝິກອົບຮົມ (ICTC), ສພຊ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ໂດຍການເປັນປະທານກ່າວເປີດຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ, ລັດຖະມົນຕີ, ຮອງລັດຖະມົນຕີ ຈາກກະຊວງຕ່າງໆ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານເນື້ອໃນພົ້ນເດັ່ນຂອງຮ່າງກົດໝາຍ ຈຳນວນ 6 ສະບັບ ໃນນີ້: ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່); ກົດໝາຍວ່າດ້ວຍລະບົບການຊຳລະ (ປັບປຸງ); ກົດໝາຍວ່າດ້ວຍການປິ່ນປົວ (ປັບປຸງ); ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ປັບປຸງ); ກົດໝາຍວ່າດ້ວຍຜູ້ພິພາກສາ (ປັບປຸງ); ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ປັບປຸງ); ນອກນັ້ນ, ຍັງຮັບຟັງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ; ບົດລາຍງານການຈັດຕັ້ງປະຕິບັດແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງລັດຖະບານ; ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023); ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023); ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຊີ້ງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2021; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ບົດລາຍງານຕ່າງໆ ຕາມຄຳເຫັນເຈາະຈີ້ມຂອງປະທານກອງປະຊຸມແຕ່ລະວັນ.

ກອງປະຊຸມຄັ້ງນີ້ ຈະດຳເນີນໄປຈົນເຖິງວັນທີ 20 ຕຸລາ 2023 ຈຶ່ງສຳເລັດ.

**(ນາງ ກຸກກິກ ບຸດດາໄຊ ແລະ ສອນສັກ ວັນວິໄຊ)**






## ຕິດຕາມກວດກາຄ້າຍຄຸມຂັງຕານປ່ຽວ ເມືອງທຸລະຄົມ ແຂວງວຽງຈັນ





(ສພຊ) ທ່ານ ພົນຈັດຕະວາ ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນຂັ້ນແຂວງທົ່ວປະເທດ, ບັນດາທ່ານຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ແຂກຖືກເຊີນຈາກສອງກຳລັງໄດ້ລົງຕິດຕາມກວດກາຄ້າຍຄຸມຂັງຕານປ່ຽວ ຕັ້ງຢູ່ເມືອງທຸລະຄົມ ແຂວງວຽງຈັນ ເມື່ອວັນທີ 13 ຕຸລາຜ່ານມາ ໂດຍການຕ້ອນຮັບຂອງທ່ານ ພົນຈັດຕະວາ ສົມລິດ ດາວຮຸ່ງສຸລີ ຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະພັກ, ຄະນະບັນຊາພ້ອມດ້ວຍນາຍ ແລະ ພົນຕຳຫຼວດຂອງຄ້າຍຄຸມຂັງດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທ່ານ ພັນເອກ ພັດສະດີ ນວນອາສາ ຮອງຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ, ຫົວໜ້າຄ້າຍຄຸມຂັງຕານປ່ຽວ ໄດ້ລາຍງານໂດຍຫຍໍ້ກ່ຽວກັບຄ້າຍຄຸມຂັງຕານປ່ຽວ ເຊິ່ງມີເນື້ອໃນບາງຕອນວ່າ: ຄ້າຍຄຸມຂັງພາກກາງຕານປ່ຽວ ເມືອງທຸລະຄົມ ແຂວງວຽງຈັນ ກໍ່ສ້າງຂຶ້ນໃນປີ 2015 ຮອດປີ 2018 ມີເນື້ອທີ່ທັງໝົດ 86 ເຮັກຕາ ສະເພາະເນື້ອທີ່ໃນກຳແພງລ້ອມແມ່ນ 25 ເຮັກຕາ, ປະກອບມີເຮືອນຂັງທັງໝົດ 11 ຫຼັງ, ແຕ່ລະຫຼັງປະກອບມີ 16 ຫ້ອງ, ທົ່ວຄ້າຍສາມາດບັນຈຸນັກໂທດໄດ້ປະມານ8.000-9.000 ຄົນ.

ຄ້າຍແຫ່ງນີ້ ຮັບເອົານັກໂທດຜູ້ທີ່ສານຕັດສິນໃຊ້ໄດ້ຢ່າງເດັດຂາດ ແລະ ດັດສ້າງພໍ່ແມ່ຝາກຈຳນວນໜຶ່ງ ເຊິ່ງກຳນົດໂທດແມ່ນນັບແຕ່ໂທດຕັດສິນ 5 ປີຂຶ້ນໄປ ຫາໂທດປະຫານຊີວິດ ໂດຍເຫດຜົນຮັບເອົາດັດສ້າງຍ້ອນວ່າ: ດັດສ້າງລົ້ນຈາກຄ້າຍດັດສ້າງສາຍນ້ຳງື່ມ (ດອນຫ້າວ) ແລະ ອາຄານເກົ່າແກ່ຊຸດໂຊມບໍ່ຮັບປະກັນຄວາມປອດໄພ.

ຄະນະພັກ-ຄະນະບັນຊາຄ້າຍຄຸມຂັງດັ່ງກ່າວ ແມ່ນໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ຈັດຕັ້ງເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ບັນດາເອກະສານນິຕິກຳ ແລະ ກົດໝາຍຂອງລັດ ໃຫ້ນາຍ ແລະ ພົນຕຳຫຼວດພາຍໃນຄ້າຍ, ໃຫ້ມີແນວຄິດການເມືອງໜັກແໜ້ນ, ເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ-ລັດ ສາມາດຈຳແນກມິດ-ສັດຕູໄດ້ຢ່າງຈະແຈ້ງ ສາມາດເຮັດຫຼ້ອນໜ້າທີ່ໆໄດ້ຮັບມອບໝາຍສຳເລັດ ແລະ ເຂັ້ມງວດ. ພ້ອມນັ້ນ, ຍັງໄດ້ຖືສຳຄັນວຽກງານຄຸ້ມຄອງ-ສຶກສາອົບຮົມຜັນປ່ຽນແນວຄິດ ແລະ ການກະທຳຂອງນັກໂທດ-ຜູ້ຖືກດັດສ້າງ ຕາມທັດສະນະຂອງພັກທີ່ວ່າ: ນັກໂທດ-ຜູ້ຖືກດັດສ້າງຄືຄົນເຈັບ ແລະ ກຳລັງຕຳຫຼວດຄຸມຂັງ-ດັດສ້າງຄືທ່ານໝໍປິ່ນປົວ ໝາຍຄວາມວ່າ ຂ້າພະຍາດກູ້ເອົາຄົນ ໂດຍລິເລີ່ມຈາກສະພາວະຄວາມເປັນຈິງຂອງບັນດານັກໂທດລ້ວນແຕ່ແມ່ນບັນດາເປົ້າໝາຍທີ່ມີແນວຄິດ ແລະ ການກະທຳທີ່ລະເມີດລະບຽບກົດໝາຍ, ບາງເປົ້າໝາຍເຄີຍມີການກະທຳຜິດ ທີ່ແຕະຕ້ອງເຖິງຄວາມສະຫງົບສຸກຂອງຊາດ, ບາງເປົ້າໝາຍກໍເຄີຍກະທຳຜິດ ທີ່ແຕະຕ້ອງເຖິງຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຍິ່ງໄປກວ່ານັ້ນ ເປົ້າໝາຍຈຳນວນໜຶ່ງເຄີຍຖືກສານຕັດສິນລົງໂທດມາຫຼາຍຄັ້ງ ຫຼາຍສະຖານຄວາມຜິດ ແຕ່ບໍ່ເຂັດຫຼາບ; ສະນັ້ນ, ບໍ່ພຽງແຕ່ເນັ້ນໜັກໃສ່ເນື້ອໃນຄຸ້ມຄອງປ້ອງກັນ, ຜັນແຍກບັນດາເປົ້າໝາຍດັ່ງກ່າວ ອອກຈາກສັງຄົມເທົ່ານັ້ນ ແຕ່ຍັງໄດ້ອອກແຮງງານສຶກສາອົບຮົມເຂົ້າໃຈຢ່າງຈິງຈັງດ້ວຍຫຼາຍຮູບການ, ວິທີການ, ມາດຕະການທີ່ເໝາະສົມ ແນໃສ່ເຮັດໃຫ້ເຂົາເຈົ້າຮູ້ສຶກກິນແໜງແຄງໃຈ ຕໍ່ໂທດທີ່ເຂົາເຈົ້າໄດ້ກໍ່ຂຶ້ນແລ້ວ ຕັ້ງໜ້າຕັ້ງຕາເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມກ້າວໜ້າ, ປັບປ່ຽນແນວຄິດ ແລະ ການກະທຳຜິດທີ່ບໍ່ດີ ໃຫ້ກັບກາຍເປັນພົນລະເມືອງດີພາຍຫຼັງອອກສູ່ສັງຄົມ.

ໃນແຕ່ລະອາທິດ, ເດືອນ, ປີ ແຕ່ລະໜ່ວຍຈະມີການສຳຫຼວດຈັດແບ່ງປະເພດຄວາມກ້າວໜ້າ ເພື່ອເຮັດໃຫ້ນັກໂທດ ແລະຜູ້ຖືກດັດສ້າງໄດ້ຮັບຮູ້ເຂົ້າໃຈ ມີບ່ອນອີງຂໍ້ແຂ່ງຂັນໃນການສູ້ຊົນ ດັດສ້າງ ກໍ່ສ້າງຕົນເອງ ແລະ ເປັນໄມ້ຫຼາວັດແທກຄວາມກ້າວໜ້າ ຫຼ້າຫຼັງໃນການດັດສ້າງແຕ່ລະໄລ່ຍະປະກອບມີ 4 ມາດຖານດັດສ້າງຄື: ມາດຖານທີ 1 ຈິງໃຈຮັບເອົາໂທດການກະທຳຜິດຂອງຕົນເອງ, ລາຍງານການເຄື່ອນໄຫວຂອງຕົນ ແລະ ພັກພວກ; ມາດຖານທີ 2 ຕັ້ງໜ້າປະຕິບັດຂໍ້ກຳນົດກົດລະບຽບຂອງຄ້າຍຢ່າງເຂັ້ມງວດ; ມາດຖານທີ 3 ຕັ້ງໜ້າຮ່ຳຮຽນ ແລະ ອອກແຮງງານເຝິກຝົນຫຼໍ່ຫຼອມຕົນເອງໃນການດັດສ້າງ ແລະ ມາດຖານທີ 4 ຍົກສູງສະຕິຕໍ່ກົນອຸບາຍມ້າງເພ່ຂອງກຸ່ມຄົນບໍ່ດີ.

ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຕັ້ງຄຳຖາມເຈາະຈີ້ມບາງບັນຫາທີ່ຍັງບໍ່ທັນຈະແຈ້ງ ພ້ອມທັງໄດ້ເຄື່ອນໄຫວຕິດຕາມກວດກາເຂດຄຸມຂັງນັກໂທດ, ເຂດການຜະລິດ ແລະ ໃຫ້ກຳລັງໃຈແກ່ນັກໂທດ ເພື່ອໃຫ້ເຂົາເຈົ້າມີກຳລັງໃຈ ແລະ ກັບກາຍເປັນຄົນດີຂອງສັງຄົມເມື່ອອອກຈາກຄ້າຍຄຸມຂັງແລ້ວ.

**(ນາງ ປາກາລັກ ພົມມີໄຊ)**



# ສພຂ ຄຳມ່ວນ ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດກົດໝາຍ

(ສພຊ) ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ, ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ, ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ໃນຂົງເຂດຍຸຕິທຳ ແລະ ປກຊ-ປກສ ຢູ່ 5 ເມືອງຄື: ມະຫາໄຊ, ຍົມມະລາດ, ນາກາຍ, ຄູນຄຳ ແລະ ຫີນບູນ ໃນລະຫວ່າງວັນທີ 5-7 ຕຸລາ 2023 ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງເຈົ້າເມືອງດັ່ງກ່າວ ພ້ອມດ້ວຍບັນດາທ່ານຄະນະປະຈຳພັກເມືອງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ, ອົງການກວດກາພັກ-ລັດເມືອງ, ຄະນະກອງບັນຊາການ ປກຊ-ປກສ ເມືອງ, ສານປະຊາຊົນເຂດ, ໄອຍະການປະຊາຊົນເຂດ, ໄອຍະການປະຊາຊົນປະຈຳເມືອງ, ຫ້ອງການຍຸຕິທຳເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມ.




ໃນການເຄື່ອນໄຫວວຽກງານຄັ້ງນີ້, ແມ່ນການກວດກາຕິລາຄາຄືນໃນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງຄຳມ່ວນ ໃນການເຄື່ອນໄຫວ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ກໍຄືຄຳຮ້ອງ-ຄຳສະເໜີ, ຂໍຄວາມເປັນທຳຂອງນາຍແລະພົນທະຫານ-ຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າຊາວແຂວງຄຳມ່ວນ. ພ້ອມກັນນັ້ນ, ແມ່ນການຕິດຕາມກວດກາຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II, ເພື່ອບັນລຸເປົ້າໝາຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄວາມໂປ່ງໃສ, ເປັນທຳ ແລະ ຖືກຕ້ອງຕາມກົດໝາຍ, ເພື່ອເຮັດໃຫ້ວຽກງານຕິດຕາມກວດກາ ແລະ ແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ໃຫ້ມີປະສິດທິພາບຍິ່ງຂຶ້ນ.

ໃນວາລະການຕິດຕາມກວດກາ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການຈັດຕັ້ງປະຕິບັດວຽກງານຂອງ ປກຊ-ປກສ ເມືອງ, ໄອຍະການປະຊາຊົນ, ຫ້ອງການຍຸຕິທຳເມືອງ, ອົງການກວດກາພັກ-ລັດເມືອງ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດວະລາແຫ່ງຊາດ, ການແກ້ໄຂຄະດີ, ການຄຸ້ມຄອງຄົນຕ່າງປະເທດທີ່ມາເຄື່ອນໄຫວຢູ່ເມືອງ, ວຽກງານຫ້ອງການຍຸຕິທຳ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ວຽກງານການແກ້ໄຂຄຳຮ້ອງ-ຄຳສະເໜີ, ວຽກງານຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ. ພາຍຫຼັງຮັບຟັງການລາຍງານຂອງບັນດາຫ້ອງການ ແລະ ຂະແໜງການທີ່ກ່ຽວຂ້ອງ.

ປະທານກອງປະຊຸມໄດ້ມີຄຳເຫັນຊີ້ນຳ ແລະ ສະເໜີໃຫ້ຄະນະກຳມະການສະພາປະຊາຊົນແຂວງ ເຈາະຈີ້ມວຽກງານຕາມພາລະບົດບາດຂອງຕົນ ແລະ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ມີການແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ ຍົກໃຫ້ເຫັນດ້ານດີ ແລະ ຂໍ້ຄົງຄ້າງ ເພື່ອຄົ້ນຄວ້າແກ້ໄຂວຽກງານດັ່ງກ່າວໃນຕໍ່ໜ້າໃຫ້ມີປະສິດພາບ ແລະ ປະສິດທິຜົນຂຶ້ນເປັນກ້າວໆ.

ໃນໂອກາດນີ້, ທ່ານ ບຸນມີ ພິມມະສອນ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ແລະ ຕີລາຄາສູງຕໍ່ຜົນງານທີ່ຄະນະນຳຂອງເມືອງ ແລະ ຂະແໜງການຍາດມາໄດ້; ພ້ອມດຽວກັນນັ້ນ, ທ່ານໄດ້ເນັ້ນຫຼາຍບັນຫາ ເປັນຕົ້ນແມ່ນໃຫ້ເອົາໃຈໃສ່ໂຄສະນາປຸກລະດົມ, ເສີມຂະຫຍາຍບັນດາແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ຫັນເອົານະໂຍບາຍ ແລະ ແຜນດັ່ງກ່າວເປັນໂຄງການອັນລະອຽດທີ່ແທດເໝາະກັບສະພາບຕົວຈິງ ແລະ ທ່າແຮງບົ່ມຊ້ອນຂອງເມືອງ. ພ້ອມນັ້ນ, ຕ້ອງຖືເອົາການຫັນລົງກໍ່ສ້າງຮາກຖານຢູ່ຂັ້ນບ້ານ, ເອົາໃຈໃສ່ວຽກງານການສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວພະນັກງານຫຼັກແຫຼ່ງ, ສະມາຊິກພັກໃຫ້ກຳແໜ້ນ ແລະ ເຊື່ອມຊຶມແນວທາງຂອງພັກຢ່າງເລິກເຊິ່ງ, ເອົາໃຈໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນແມ່ນການແກ້ໄຂບັນຫາຢາເສບຕິດ, ສະກັດກັ້ນການຄ້າຂາຍເຖື່ອນ ແລະ ບັນຫາອື່ນໆໃຫ້ໝົດໄປ; ຄຽງຄູ່ກັນນັ້ນ ຈົ່ງເຊີດຊູຄວາມຮັບຜິດຊອບໃນໜ້າທີ່ການເມືອງຂອງຕົນ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນ, ຕັ້ງໜ້າຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງໃຫ້ບັນລຸຕາມຄາດໝາຍ, ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານໃນຂົງເຂດ ຍຸຕິທຳ ແລະ ປກຊ-ປກສ ໃຫ້ນັບມື້ດີຂຶ້ນເທື່ອລະກ້າວ, ຕິດພັນກັບການໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ໃຫ້ທົ່ວສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ, ຮັບປະກັນກ້າວໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ.

ກ່ອນໜ້ານີ້, ທ່ານ ບຸນມີ ພິມມະສອນ ໄດ້ເປັນປະທານກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄຂຂຶ້ນໃນຕົ້ນເດືອນຕຸລາ 2023 ທີ່ສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ຄະນະກອງບັນຊາການທະຫານແຂວງ, ຄະນະກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການທຽບເທົ່າພະແນກການຂອງແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບຄື: ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ປະກອບມີ V ພາກ, 8 ໝວດ, 50 ມາດຕາ; ກົດໝາຍວ່າດ້ວຍການປ້ອງກັນຊາດ ມີ X ພາກ, 8 ໝວດ, 65 ມາດຕາ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ) ມີ IX ພາກ, 6 ໝວດ, 55 ມາດຕາ. ຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ແລກປ່ຽນປະກອບຄຳ-ຄິດເຫັນຕໍ່ບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງ 3 ສະບັບ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຂອງບົດປະເມີນກົດໝາຍມີເນື້ອໃນຖືກຕ້ອງສອດຄ່ອງຕາມສະພາບຄວາມເປັນຈິງ.

ໂອກາດດັ່ງກ່າວ, ທ່ານ ບຸນມີ ພິມມະສອນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ໄດ້ຕີລາຄາສູງຕໍ່ກອງປະຊຸມ ເຊິ່ງຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນຂັ້ນແຂວງ, ກຳລັງ ປກຊ-ປກສ ແຂວງ ແລະ ແຂກຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນເອົາໃຈໃສ່ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນການຕໍ່ບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບຄັ້ງນີ້ ເພື່ອເຮັດໃຫ້ມີເນື້ອໃນສົມບູນ ແລະ ສອດຄ່ອງກັບສະພາບຕົວຈິງ, ບັນດາຄຳຄິດ-ຄຳຄິດເຫັນຂອງຜູ້ແທນແມ່ນຈະໄດ້ສັງລວມລາຍງານຕໍ່ຄະນະຮັບຜິດຊອບປະເມີນກົດໝາຍສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າປັບປຸງ ເຂົ້າໃສ່ກົດໝາຍ ເພື່ອໃຫ້ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ຈາກນັ້ນ, ທ່ານຍັງໄດ້ກ່າວວ່າ: ກົດໝາຍດັ່ງກ່າວ ຈະກາຍເປັນເຄື່ອງມືທີ່ສຳຄັນໃນການປະຕິບັດສິດ ແລະ ໜ້າທີ່ຂອງກຳລັງປ້ອງກັນຊາດ- ກຳລັງປ້ອງກັນຄວາມສະຫງົບໃນທົ່ວປະເທດ ກໍຄືຂອງແຂວງໃຫ້ມີຄຸນນະພາບສູງຂຶ້ນໃນການປະກອບສ່ວນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນຮັບປະກັນ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ ຈະມີຄວາມສັກສິດນັບມື້ນັບສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.



**(ເອື້ອ ມະໂນສິງ)**

# ສສຊ ແລະ ສສຂ ຫົວພັນ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5

(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ແລະ ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ຂອງແຂວງ.



ຕອນເຊົ້າວັນທີ 13 ຕຸລາ 2023 ທີ່ຫໍວັດທະນະທຳແຂວງຫົວພັນ ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ຈັດພິທີເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫົວພັນ ຊຸດທີ II ໂດຍການເປັນຄະນະປະທານຂອງທ່ານ ນາງ ສວຍເພັດ ທອງສົມບັດ ສສຊ ປະຈຳເຂດເລືອກຕັ້ງທີ 8, ປະທານສະຫະພັນແມ່ຍິງແຂວງຫົວພັນ; ທ່ານ ສີຄຳ ບຸນມີໄຊ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ ແລະ ທ່ານ ທອນສຸກ ເພັດວິຍານ ສສຂ ປະຈຳເຂດເລືອກຕັ້ງເມືອງຊຳເໜືອ, ປະທານກວດກາພັກ-ລັດເມືອງຊຳເໜືອ; ເຂົ້າຮ່ວມຮັບຟັງມີບັນດາການນຳແຂວງ, ການນຳເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ບັນດາລັດວິສາຫະກິດ, ສາຂາທະນາຄານ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນອ້ອມຂ້າງເທສະບານເມືອງຊຳເໜືອ ເຂົ້າຮ່ວມທັງໝົດ 340 ຄົນ ຍິງ 151 ຄົນ.

ການເຜີຍແຜ່ຄັ້ງນີ້, ບັນດາທ່ານ ສສຊ ຊຸດທີ IX ແລະ ສສຂ ຫົວພັນ ຊຸດທີ II ໄດ້ຜັດປ່ຽນກັນນຳເອົາເນື້ອໃນ,ຈິດໃຈຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫົວພັນ ຊຸດທີ II ເປັນຕົ້ນແມ່ນບົດລາຍງານລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ 6 ເດືອນທ້າຍປີ 2023; ຜົນການເຄື່ອນໄຫວການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ແລະ ບັນຫາອື່ນໆທີ່ສຳຄັນຂອງຊາດ ແລະ ຂອງແຂວງຫົວພັນ ລາຍງານຕໍ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ຜົນສຳເລັດຂອງສອງກອງປະຊຸມທີ່ໄດ້ຮັບຮອງໄປແລ້ວນັ້ນ ພ້ອມກັນນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະ ຍັງໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມສະເໜີຂໍ້ຂ້ອງໃຈ ເພື່ອເປັນການແລກປ່ຽນບັນຫາຕ່າງໆທີ່ຕິດພັນກັບການດຳລົງຊີວິດທີ່ຍັງພົບຄວາມຫຍຸ້ງຍາກ ເພື່ອເປັນຂໍ້ມູນໃຫ້ ສສຊ ແລະ ສສຂ ນຳໄປຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂຕາມຄວາມເໝາະສົມ.

**(ນັກຂ່າວ ສພຂ ຫົວພັນ)**



## ສະມາຊິກສະພາແຫ່ງຊາດ ພົບປະຜູ້ມີສິດເລືອກຕັ້ງ ເມືອງເຊໂປນ



(ສພຊ) ທ່ານ ຈັນທະວົງ ແສນອາມາດມົນຕີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ຮອງປະທານສູນກາງແນວລາວສ້າງຊາດ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງເຊໂປນ ໄດ້ພົບປະກັບຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ບ້ານໂພນໄຊ, ບ້ານແດນສະຫວັນ ແລະ ສະໂມສອນຫ້ອງວ່າການເມືອງເຊໂປນ ແຂວງສະຫວັນນະເຂດ ໂດຍມີຜູ້ເຂົ້າຮ່ວມທັງໝົດ 655 ຄົນ ຍິງ 290 ຄົນ.

ໃນການເຄື່ອນໄຫວດັ່ງກ່າວ, ທ່ານ ພິງຄຳຮັກ ບຸດທະວົງ ເຈົ້າເມືອງເຊໂປນ ໄດ້ກ່າວຕ້ອນຮັບ ພ້ອມທັງລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ; ຈາກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ດັ່ງກ່າວ ພ້ອມທັງໄດ້ໂອ້ລົມຕໍ່ຜູ້ມີສິດເລືອກຕັ້ງ ໂດຍເນັ້ນໜັກໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ຕ້ອງມີຄວາມສາມັກຄີປອງດອງຊ່ວຍກັນສ້າງສາພັດທະນາ ສາມາດສ້າງລາຍຮັບກຸ້ມຕົນເອງ, ຜະລິດຂາຍເປັນສິນຄ້າ ເພື່ອຫຼຸດຜ່ອນຄ່ານິຍົມການນຳໃຊ້ຜະລິດຕະພັນຂອງຕ່າງປະເທດ ແລະ ເອົາໃຈໃສ່ນຳພາສິດສອນລູກ-ຫຼານໃຫ້ໄດ້ເຂົ້າໂຮງຮຽນ; ພ້ອມນັ້ນ, ບັນດາຜູ້ມີສິດເລືອກຕັ້ງກໍໄດ້ມີຄຳສະເໜີ ເປັນຕົ້ນແມ່ນໃຫ້ມີການຊົດເຊີຍຄ່າເນື້ອທີ່ທຳການຜະລິດທີ່ໄດ້ຮັບຜົນກະທົບຈາກການຂຸດຄົ້ນບໍ່ແຮ່, ການອອກໃບຕາດິນສຸກສຳ, ການຍົກຍ້າຍຈັດສັນບ້ານປະຊາຊົນທີ່ຕັ້ງຢູ່ພື້ນທີ່ຕໍ່າຂຶ້ນພື້ນທີ່ສູງເພື່ອບໍ່ໃຫ້ນ້ຳຖ້ວມ, ປັບຂຶ້ນເງິນອຸດໜູນນາຍບ້ານ ຄຳສະເໜີເຫລົ່ານີ້ຄະນະຜູ້ແທນກໍໄດ້ມອບໃຫ້ການນຳເມືອງນຳໄປຄົ້ນຄວ້າ ປະສານສົມທົບກັບພາກສ່ວນກ່ຽວຂ້ອງແກ້ໄຂ ພ້ອມທັງຮັບເອົາເພື່ອຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

ໂອກາດດຽວກັນນີ້, ຄະນະຜູ້ແທນໄດ້ນຳເອົາເຄື່ອງອຸປະກອນການຮຽນ, ອຸປະກອນກິລາ, ເຄື່ອງນຸ່ງຫົ່ມ ແລະ ເກີບແພ ມອບໃຫ້ການນຳເມືອງ ເພື່ອນຳໄປມອບໃຫ້ນັກຮຽນ ແລະ ຢ້ຽມຢາມໂຄງການກໍ່ສ້າງອະນຸສອນສະຖານທ່ານ ມາ ໄຂຄຳພິທູນ, ບໍລິສັດ ກວາຊາ ຢາງພາລາ, ບໍລິສັດ ໜາກເກົ້າ ອີກດ້ວຍ.

**(ສະຫວັດດີ ສີບຸນເຮືອງ)**



## ປະທານ ສພຂ ແຂວງຈຳປາສັກ ສຳເລັດການຢ້ຽມຢາມປະຊາຊົນເມືອງຈຳປາສັກ



(ສພຊ) ທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ແລະ ທ່ານ ສົມສີ ມະນີນິນ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຈຳປາສັກ ສົມທົບກັບທ່ານ ສີຈະເລີນໄຊ ສີລາເພັດ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຈຳປາສັກ, ທ່ານ ນາງ ເຂັມຄຳ ກິດຕິພັນ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຈຳປາສັກ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ສຳເລັດການເຄື່ອນໄຫວພົບປະຢ້ຽມຢາມປະຊາຊົນຜູ້ມີສິດເລືອກຕັ້ງຢູ່ບັນດາບ້ານຂອງເຂດເລືອກຕັ້ງເມືອງຈຳປາສັກ ເມື່ອທ້າຍເດືອນກັນຍາຜ່ານມາ ໂດຍເລີ່ມເຄື່ອນໄຫວມາແຕ່ຕົ້ນເດືອນກັນຍາເປັນຕົ້ນມາ ຢູ່ບັນດາຈຸດບ້ານ ແລະ ກຸ່ມກອງອ້ອມຂ້າງຂອງເຂດເລືອກຕັ້ງເມືອງຈຳປາສັກ ຄື: ບ້ານທ່າຕານ, ບ້ານດອນຕະລາດ, ບ້ານໜອງທໍ, ບ້ານຄຳຈະເລີນ, ບ້ານໂນນທາຍ, ບ້ານວັດຫຼວງເກົ່າ, ບ້ານທາງຄົບ, ບ້ານຂອນແກ່ນ ແລະ ສຳນັກງານອົງການປົກຄອງເມືອງຈຳປາສັກ.

ການເຄື່ອນໄຫວໃນແຕ່ລະຈຸດ ໄດ້ຮັບການຕ້ອນຮັບຈາກຄະນະນຳອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນຢ່າງອົບອຸ່ນ ພ້ອມທັງໄດ້ດຳເນີນກອງປະຊຸມພົບປະກັບອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ, ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບລວມຂອງການຈັດຕັ້ງປະຕິບັດວຽກງານຂອງແຕ່ລະພາກສ່ວນໃນໄລຍະຜ່ານມາ ເຊິ່ງສາມາດເຫັນໄດ້ໝາກຜົນ ຜົນງານທີ່ພົ້ນເດັ່ນ ແລະ ຂໍ້ຄົງຄ້າງບາງດ້ານທີ່ອົງການປົກຄອງເມືອງ ແລະ ປະຊາຊົນແຕ່ລະບ້ານຈະຕ້ອງໄດ້ສືບຕໍ່ສຸມໃສ່ໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດໃນຕໍ່ໜ້າ. ພ້ອມນັ້ນ, ທ່ານ ສາຍທອງ ໄຊຍະວົງ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ສະເໜີບາງເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IXແລະສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ທີ່ໄດ້ພິຈາລະນາ ຮັບຮອງ ຫຼາຍບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງແຂວງຈຳປາສັກ ເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ເຊື່ອມຊຶມເຂົ້າໃຈຢ່າງເລິກເຊິ່ງ ທັງໄດ້ຮຽກຮ້ອງໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານການສ້າງສາພັດທະນາເສດຖະກິດ-ສັງຄົມ ແລະ ດຳລົງຊີວິດບົນພື້ນຖານການປະຢັດມັດທະຍັດ ພ້ອມກັນສູ້ຊົນຜ່ານຜ່າສະພາບຄວາມຫຍຸ້ງຍາກທີ່ກຳລັງປະເຊີນຢູ່ໃຫ້ສຳເລັດ. ພ້ອມນີ້, ການພົບປະຍັງໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ປະກອບຄຳຄິດເຫັນ, ຄຳສະເໜີຕໍ່ຄະນະຜູ້ແທນ ເຊິ່ງຜ່ານການຮັບຟັງຄຳສະເໜີ ສາມາດສັງລວມໄດ້ຫຼາຍບັນຫາທີ່ພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ຕໍ່ກັບຄຳສະເໜີຂອງປະຊາຊົນ ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ໄດ້ຊີ້ແຈງອະທິບາຍຕໍ່ບາງບັນຫາຄຳສະເໜີໃຫ້ປະຊາຊົນໄດ້ເຂົ້າໃຈ ສ່ວນຄຳສະເໜີທີ່ເປັນບັນຫາໃຫຍ່ ແລະ ພົວພັນກັບຂະແໜງການຂອງພາກລັດ ແລະ ເອກະຊົນ ກອງເລຂາກອງປະຊຸມໄດ້ບັນທຶກສັງລວມ ເພື່ອນຳໄປລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ກໍຄືຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາ, ປະສານສົມທົບຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການໃນຕໍ່ໜ້າ.

**(ສົມວິຈິດ ໄຊມົນຕີ)**



## ປະເມີນການປະຕິບັດກົດໝາຍ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ




(ສພຊ) ໃນລະຫວ່າງວັນທີ 9-10 ຕຸລາ 2023 ສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ຄື: ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ, ກົດໝາຍວ່າດ້ວຍການປ້ອງກັນຊາດ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງ, ມີປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ຫົວໜ້າກອງບັນຊາການທະຫານນະຄອນຫຼວງ, ຫົວໜ້າກອງບັນຊາການ ປກສ ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອເປັນຂໍ້ມູນໃຫ້ສະພາແຫ່ງຊາດໃນການຕິດຕາມກວດກາ ແລະ ພິຈາລະນາຮັບຮອງເອົາໃນຂັ້ນຕອນຕ່າງໆ, ໃນການຊຸກຍູ້ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ເພື່ອໄປກ້າວໄປສູ່ການປັບປຸງໃຫ້ມີເນື້ອໃນຄົບຖ້ວນສົມບູນ, ສອດຄ່ອງກັບສະພາບການພັດທະນາທາງດ້ານເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນໄລຍະໃໝ່, ຮັບປະກັນຫຼັກວິຊາການ, ລັກສະນະວິທະຍາສາດ, ລັກສະນະຊາດ, ເປັນລະບົບ, ຄົບຊຸດ, ຮັດກຸມ, ກົມກຽວ ແລະ ສາມາດຈັດຕັ້ງປະຕິບັດໄດ້, ເພີ່ມທະວີຄວາມເອົາໃຈໃສ່ເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນໃຫ້ເລິກເຊິ່ງ ແລະ ມີຈຸດສຸມ ເພື່ອສະຫຼຸບສັງລວມລາຍງານໃຫ້ສະພາແຫ່ງຊາດ ເພື່ອນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.



# ຍົກສູງວຽກງານ ສສ ເພດຍິງ ແລະ ສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ເດັກນ້ອຍ

(ສພຊ) ເພື່ອກໍ່ສ້າງທຸກເງື່ອນໄຂໃຫ້ເພດຍິງໄດ້ເຄື່ອນໄຫວວຽກງານໃນລະບົບການຈັດຕັ້ງພັກ-ລັດ ໃນສັງຄົມແລະສົ່ງເສີມຄວາມກ້າວໜ້າເພດຍິງໃຫ້ມີສິດເທົ່າທຽມກັນກັບເພດຊາຍ, ເຜີຍແຜ່ໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບ ກົດໝາຍ ແລະ ເອກະສານຕ່າງໆທີ່ຕິດພັນກັບວຽກງານການເຊື່ອມທັດສະນະບົດບາດເພດຍິງ-ເພດຊາຍ ແລະ ໃຫ້ກວ້າງຂວາງທົ່ວເຖິງຕົວຈິງ ພ້ອມທັງຮັບປະກັນເຮັດໜ້າທີ່ຊຸກຍູ້, ຕິດຕາມກວດກາ ແລະ ເກັບກຳຂໍ້ມູນເພື່ອປົກປ້ອງ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໃນທົ່ວສັງຄົມ.




ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມຝຶກອົບຮົມພາຍໃຕ້ຫົວຂໍ້ "ຍົກສູງວຽກງານສະມາຊິກສະພາປະຊາຊົນເພດຍິງແຂວງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍ" ໃນລະຫວ່າງວັນທີ 3-4 ຕຸລາ ຜ່ານມາ ທີ່ສະໂມສອນໃຫຍ່ຂອງເມືອງຄົງເຊໂດນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຄະນະຮັບຜິດຊອບສົ່ງເສີມຄວາມກ້າວໜ້າແມ່ຍິງຂັ້ນເມືອງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 8 ເມືອງ, ຕາງໜ້າຈາກສະຫະພັນແມ່ຍິງປະຈຳເມືອງ ຕະຫຼອດຮອດວິທະຍາກອນ ແລະ ສຳມະນາກອນ, ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ ເຂົ້າຮ່ວມທັງໝົດ 100 ກວ່າທ່ານ.

ວາລະຂອງກອງປະຊຸມ, ວິທະຍາກອນໄດ້ຜັດປ່ຽນກັນນຳສະເໜີ ແລະ ບັນລະຍາຍ 11 ເອກະສານເນື້ອໃນຫົວຂໍ້ທີ່ສຳຄັນ ປະກອບດ້ວຍ: ຍຸດທະສາດເຊື່ອມຊຶມທັດສະນະບົດບາດຍິງ-ຊາຍແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ພາລະບົດບາດຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ມະຕິການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ; ພາລະບົດບາດຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ແລະ ມະຕິການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ; ການພັດທະນາຊັບພະຍາກອນມະນຸດ ແລະ ພາລະບົດບາດຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ; ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ຢູ່ໃນຂົງເຂດການຜະລິດກະສິກຳ; ການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານເອກະສານເອເລັກໂຕຼນິກດ້ວຍແອັບພລິເຄຊັນ Lao Na ສະພາແຫ່ງຊາດ ແລະ ການເຂົ້າເຖິງເອກະສານເອເລັກໂຕຼນິກຂອງສະພາປະຊາຊົນຂັ້ນແຂວງ; ຍຸດທະສາດການພັດທະນາແມ່ຍິງລາວ, ແມ່ຍິງແຂວງ; ກົດໝາຍວ່າດ້ວຍການຄ້າມະນຸດ ແລະ ພາລະບົດບາດຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ; ຄວາມຮູ້ພື້ນຖານກ່ຽວກັບບົດບາດຍິງ-ຊາຍ ແລະ ວຽກງານໂພຊະນາການ; ຈາກນັ້ນ, ວິທະຍາກອນ ແລະ ສຳມະນາກອນ ໄດ້ພ້ອມກັນສົນທະນາແລກປ່ຽນຄຳຄິດຄຳເຫັນຮ່ວມກັນເຂົ້າໃສ່ບັນດາເນື້ອໃນເອກະສານທີ່ໄດ້ນຳສະເໜີ, ພ້ອມກັນປະຕິບັດຕົວຈິງໃນບາງຫົວຂໍ້ ເຮັດໃຫ້ການຝຶກມີບັນຍາກາດຟົດຟື້ນເຕັມໄປດ້ວຍການມີສ່ວນຮ່ວມຂອງສຳມະນາກອນທຸກທ່ານແນໃສ່ນຳເອົາບົດຮຽນໃນຄັ້ງນີ້ ສາມາດເຊື່ອມສານການພັດທະນາ ແລະ ຊ່ວຍສ້າງຜົນປະໂຫຍດອັນຊອບທຳຂອງເພດຍິງ ແລະ ເດັກ ໃຫ້ດີຍິ່ງຂຶ້ນໃນທຸກຂົງເຂດ.



ກອງປະຊຸມຝຶກອົບຮົມໄດ້ຮັບການສະໜັບສະໜູນທຶນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ນາງ ນິດດາວັນ ແສງບົວລະພາ)**




# ຕິດຕາມກວດກາການທົດແທນຈາກຜົນກະທົບ ໂຄງການຂຸດຄົ້ນຫີນອ່ອນມາໂບ ແລະ ການຄຸ້ມຄອງການປູກຫຍ້າລ້ຽງສັດ

(ສພຊ) ເມື່ອບໍ່ດົນມານີ້, ທ່ານ ນາງ ວຽນວິໄລ ດີລະພັນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ທັງເປັນກຳມະການສັງກັດຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການທົດແທນຜົນເສຍຫາຍໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຂຸດຄົ້ນຫີນອ່ອນມາໂບ ຢູ່ບ້ານແດນສະຫວ່າງ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.



ການຕິດຕາມກວດກາໃນຄັ້ງນີ້ ແມ່ນເຮັດວຽກຮ່ວມກັບ ບໍລິສັດ ແດນສະຫວ່າງມາໂບ ຈຳກັດຜູ້ດຽວ ເຊິ່ງໄດ້ຮັບຟັງການລາຍງານຈາກບໍລິສັດກ່ຽວກັບສະພາບທົ່ວໄປຂອງໂຄງການ, ຂັ້ນຕອນການສຳຫຼວດ, ການທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກການຈັດຕັ້ງປະຕິບັດໂຄງການ ໂດຍມີຄອບຄົວທີ່ໄດ້ຮັບຜົນກະທົບຈຳນວນ 26 ຄອບຄົວ, ໄດ້ຮັບການຊົດເຊີຍເປັນຈຳນວນເງິນ 551.415.500 ກີບ ໃນນັ້ນ, ມີການຊົດເຊີຍການຍົກຍ້າຍຫຼຸມຝັງສົບ ຈຳນວນ 13 ຫຼຸມ, ເປັນຈຳນວນເງິນ 184.860.000 ກີບ ແລະ ຊົດເຊີຍຜົນກະທົບການສ້າງເສັ້ນທາງຫຼີກເຂົ້າຫາເຂດທົດລອງຂຸດຄົ້ນຂອງບໍລິສັດເປັນຈຳນວນເງິນ 366.555.500 ກີບ. ຈາກນັ້ນ, ຄະນະໄດ້ມີຄຳຖາມເຈາະຈີ້ມ ແລະ ແລກປ່ຽນຄວາມຄິດເຫັນ ຢ່າງພາວະວິໄສ ແລະ ກົງໄປກົງມາ.

ໃນຕອນທ້າຍ, ທ່ານ ນາງ ວຽນວິໄລ ດີລະພັນ ຍັງໄດ້ເນັ້ນໜັກໃຫ້ພະແນກການທີ່ກ່ຽວຂ້ອງດຳເນີນການຕິດຕາມກວດກາຜົນກະທົບຕໍ່ສິ່ງແວດລ້ອມ ເປັນຕົ້ນແມ່ນການປ້ອງກັນດິນເຈື່ອນ, ການຕັດໄມ້ທຳລາຍປ່າ, ຜົນກະທົບທາງອາກາດ, ຜົນກະທົບທາງນ້ຳ ແລະ ຜົນກະທົບທາງສຽງ ພ້ອມທັງຊີ້ນຳໃຫ້ບໍລິສັດ ແດນສະຫວ່າງມາໂບ ຈຳກັດຜູ້ດຽວ ປະຕິບັດຕາມສັນຍາໃນການມອບພັນທະໃຫ້ແກ່ລັດຖະບານຕາມລະບຽບການ ແລະ ຊຸກຍູ້ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນເຂດໃກ້ຄຽງ ແລະ ຕ້ອງຟື້ນຟູສະພາບແວດລ້ອມ ຫຼັງການສຳຫຼວດໃຫ້ຢູ່ໃນຄວາມເໝາະສົມຕາມເງື່ອນໄຂຕົວຈິງ.

ໄລຍະດຽວກັນ, ທ່ານ ນາງ ວຽນວິໄລ ດີລະພັນ ພ້ອມດ້ວຍຄະນະ ຍັງໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງການປູກຫຍ້າລ້ຽງສັດ ຢູ່ເມືອງໂພນໄຊ ແຂວງຫຼວງພະບາງ ໂດຍໄດ້ເຮັດວຽກຮ່ວມກັບອົງການປົກຄອງເມືອງໂພນໄຊ ຢູ່ທີ່ຫ້ອງປະຊຸມຫ້ອງວ່າການເມືອງ.

ໂອກາດນີ້, ທ່ານ ແກ່ນຈັນ ພິລາວັນ ຮອງເຈົ້າເມືອງໂພນໄຊ ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ການຈັດຕັ້ງປະຕິບັດມະຕິເລກທີ 06/ສພຂ, ລົງວັນທີ 2 ມີນາ 2022 ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ເລກທີ 234/ຈຂ.ຫຼບ, ລົງວັນທີ 12 ເມສາ 2022 ວ່າດ້ວຍການຄຸ້ມຄອງການປູກຫຍ້າລ້ຽງສັດ, ໄດ້ຕອບຄຳຖາມເຈາະຈີ້ມແລະ ລາຍງານການຈັດຕັ້ງປະຕິບັດການປູກຫຍ້າລ້ຽງສັດຂອງປະຊາຊົນຢູ່ໃນເມືອງໂພນໄຊໃນໄລຍະຜ່ານມາ ແລະ ລົງເຮັດວຽກຮ່ວມກັບປະຊາຊົນ (ຄອບຄົວຕົວແບບ) ຈຳນວນ 2 ບ້ານ ຄື: ບ້ານດອນໄຊ ແລະ ບ້ານຫ້ວຍໂນະ ພ້ອມທັງລົງກວດກາສະຖານທີ່ປູກຫຍ້າຕົວຈິງ.

ໃນຕອນທ້າຍ, ທ່ານ ນາງ ວຽນວິໄລ ດີລະພັນ ຍັງໄດ້ເນັ້ນໜັກໃຫ້ອົງການປົກຄອງເມືອງໂພນໄຊ ສືບຕໍ່ສຶກສາອົບຮົມການເມືອງແນວຄິດ ໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ-ລັດວາງອອກ, ສືບຕໍ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ໄດ້ຮັບຜົນດີ ແລະ ຕິດຕາມກວດກາ ພ້ອມທັງເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້ນິຕິກຳທີ່ກ່ຽວພັນກັບການປູກຫຍ້າລ້ຽງສັດ ກໍຄືມະຕິເລກທີ 06/ສພຂ, ລົງວັນທີ 2 ມີນາ 2022 ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງເລກທີ 234/ຈຂ.ຫຼບ, ລົງວັນທີ 12 ເມສາ 2022 ວ່າດ້ວຍການຄຸ້ມຄອງການປູກຫຍ້າລ້ຽງສັດ ໃຫ້ຈັດຕັ້ງປະຕິບັດຢ່າງມີຈຸດສຸມ ແລະ ຂັ້ນຕອນ. ສຳຄັນແມ່ນໃຫ້ລຽງບູລິມະສິດຂອງແຕ່ລະໜ້າວຽກເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ໃນການຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້. ໂອກາດດຽວກັນນັ້ນ ຍັງໄດ້ຖືໂອກາດນີ້ ຮັບຟັງຄຳຄິດ, ຄຳເຫັນ, ຄຳສະເໜີ ຈາກພໍ່ແມ່ປະຊາຊົນ ຕໍ່ວຽກງານຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງເມືອງຕື່ມອີກ.

**(ນາງ ຈັນທິມາ ສໍພັນໄຊແກ້ວ)**






# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

## ໝວດທີ 5
## ວິສະວະກອນ

**ມາດຕາ 42 ວິສະວະກອນ**

ໃນການພັດທະນາເຂື່ອນ ມີວິສະວະກອນສອງປະເພດ ດັ່ງນີ້:

1. ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ;
2. ວິສະວະກອນຝ່າຍລັດ.

**ມາດຕາ 43 ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ**

ວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບການຄັດເລືອກໂດຍຜູ້ພັດທະນາເຂື່ອນ ໃຫ້ເປັນຜູ້ຮັບຜິດຊອບທັງໝົດຕໍ່ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ. ໃນນັ້ນໃຫ້ແຕ່ງຕັ້ງຜູ້ໜຶ່ງ ເປັນຫົວໜ້າວິສະວະກອນ ແລ້ວສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາຮັບຮອງ.

ເງື່ອນໄຂການຄັດເລືອກວິສະວະກອນ ແລະ ແຕ່ງຕັ້ງຫົວໜ້າວິສະວະກອນຝ່າຍຜູ້ພັດທະນາເຂື່ອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 44 ວິສະວະກອນຝ່າຍລັດ**

ວິສະວະກອນຝ່າຍລັດ ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄັດເລືອກ ແລະ ແຕ່ງຕັ້ງໃຫ້ເປັນທີ່ປຶກສາຝ່າຍລັດ ໃນການກວດສອບ ແລະ ກວດກາ ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ.

ຂະແໜງການທີ່ກ່ຽວຂ້ອງ ຄັດເລືອກວິສະວະກອນຝ່າຍລັດ ຜູ້ມີມາດຕະຖານ ແລະ ເງື່ອນໄຂ ໂດຍໃຫ້ບຸລິມະສິດແກ່ບຸກຄົນທີ່ເປັນພົນລະເມືອງລາວ ຫຼື ນິຕິບຸກຄົນພາຍໃນຂອງ ສປປ ລາວ ໃນກໍລະນີຈຳເປັນ ກໍສາມາດຄັດເລືອກວິສະວະກອນທີ່ເປັນບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດໄດ້.

ມາດຕະຖານ ແລະ ເງື່ອນໄຂ ໃນການຄັດເລືອກວິສະວະກອນຝ່າຍລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ແຜນຮັບມືສຸກເສີນ
## ໝວດທີ 1
## ການສ້າງ ແລະ ຮັບຮອງ ແຜນຮັບມືສຸກເສີນ

**ມາດຕາ 45 ການສ້າງແຜນຮັບມືສຸກເສີນ**

ຜູ້ພັດທະນາເຂື່ອນ ຕ້ອງສ້າງແຜນຮັບມືສຸກເສີນສາມສະບັບ ດັ່ງນີ້:

1. ແຜນຮັບມືສຸກເສີນສຳລັບການກໍ່ສ້າງ;
2. ແຜນຮັບມືສຸກເສີນສຳລັບການກັກເກັບນ້ຳ;
3. ແຜນຮັບມືສຸກເສີນສຳລັບການດຳເນີນງານຂອງເຂື່ອນ.

ຜູ້ພັດທະນາເຂື່ອນ ຕ້ອງເອົາແຜນຮັບມືສຸກເສີນໄປທາບທາມຄຳເຫັນນຳພາກສ່ວນທີ່ກ່ຽວຂ້ອງ ພາຍຫຼັງສຳເລັດການສ້າງແຜນຮັບມືສຸກເສີນ ແລະ ນຳສະເໜີຂໍການພິຈາລະນາຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ກ່ອນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ.

**ມາດຕາ 46 ເນື້ອໃນຂອງແຜນຮັບມືສຸກເສີນ**

ແຜນຮັບມືສຸກເສີນ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ປະເພດ ແລະ ລະດັບເຫດສຸກເສີນ ພ້ອມດ້ວຍວິທີການປ້ອງກັນ ແລະ ແກ້ໄຂເຫດສຸກເສີນ;
2. ບັນຊີລາຍຊື່ ບ້ານ, ເມືອງ, ເທດສະບານ, ນະຄອນ ແລະ ແຂວງ, ນະຄອນຫຼວງ ພ້ອມດ້ວຍເບີໂທລະສັບຕິດຕໍ່ທີ່ສາມາດແຈ້ງເຕືອນ ໃນເວລາເກີດເຫດສຸກເສີນ;
3. ບັນຊີລາຍຊື່ຜູ້ຈະໄດ້ຮັບຜົນກະທົບຢູ່ເຂດຕອນເທິງເຂື່ອນ ຫຼື ເຂດຕອນລຸ່ມເຂື່ອນ ໃນເວລາເກີດເຫດສຸກເສີນ;
4. ລາຍຊື່ ແລະ ເບີໂທລະສັບຕິດຕໍ່ພົວພັນກັບພາກສ່ວນທີ່ກ່ຽວຂ້ອງຂອງຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
5. ເວລາ ແລະ ກໍລະນີທີ່ຕ້ອງໄດ້ຕິດຕໍ່ ແລະ ແຈ້ງເຫດສຸກເສີນຕໍ່ຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
6. ຂໍ້ຄວາມທີ່ໃຊ້ໃນການແຈ້ງເຕືອນລ່ວງໜ້າ ຕໍ່ຜູ້ພັດທະນາເຂື່ອນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
7. ລະບົບ, ປະເພດ ແລະ ຊະນິດວັດຖຸປະກອນທີ່ນຳໃຊ້ສຳລັບການແຈ້ງເຕືອນປະຊາຊົນ ທີ່ຈະໄດ້ຮັບຜົນກະທົບ;
8. ບັນຊີບຸກຄະລາກອນ, ເຄື່ອງມື, ອຸປະກອນ, ຍານພາຫະນະຂົນສົ່ງ ແລະ ສິ່ງອຳນວຍຄວາມສະດວກໃນການແກ້ໄຂ ແລະ ຊ່ວຍເຫຼືອ ເປັນຕົ້ນ ອາຫານ, ນ້ຳດື່ມ, ເຄື່ອງນຸ່ງຫົ່ມ, ການບໍລິການແພດສຸກເສີນ ໃນເວລາເກີດເຫດສຸກເສີນ;
9. ຈຸດທີ່ຕັ້ງ ແລະ ສະຖານທີ່ ທີ່ນຳໃຊ້ເປັນຈຸດເຕົ້າໂຮມ ແລະ ສະຖານທີ່ພັກພາອາໄສຊົ່ວຄາວ ຊຶ່ງເປັນບ່ອນທີ່ສູງ ແລະ ນ້ຳບໍ່ສາມາດຖ້ວມໄດ້;
10. ມາດຕະການ ແລະ ຂັ້ນຕອນ ສຳລັບການປ້ອງກັນບໍ່ໃຫ້ຜົນກະທົບ ແຜ່ລາມເປັນວົງກວ້າງ ແລະ ຂ້າມຊາຍແດນ;
11. ແຜນທີ່ ເຂດ ແລະ ລະດັບນ້ຳຖ້ວມ ທີ່ຄາດຄະເນຈະໄດ້ຮັບຜົນກະທົບ ລວມທັງການກຳນົດຮູບແບບຈຳລອງເຫດສຸກເສີນ;
12. ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນຮັບມືສຸກເສີນຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຜູ້ພັດທະນາເຂື່ອນ, ຜູ້ຈະໄດ້ຮັບຜົນກະທົບ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
13. ບາດກ້າວ ແລະ ຂັ້ນຕອນ ສຳລັບການປະຕິບັດແຜນຮັບມືສຸກເສີນ;
14. ເນື້ອໃນອື່ນຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 47 ການຮັບຮອງແຜນຮັບມືສຸກເສີນ**

ພາຍຫຼັງສຳເລັດການສ້າງແຜນຮັບມືສຸກເສີນແລ້ວໃຫ້ຜູ້ພັດທະນາເຂື່ອນສົ່ງແຜນຮັບມືສຸກເສີນໄປຍັງຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາຮັບຮອງ.

ຂະແໜງການທີ່ກ່ຽວຂ້ອງ ຕ້ອງໃຫ້ຄຳແນະນຳ, ປຶກສາຫາລືກັບຜູ້ພັດທະນາເຂື່ອນ ກ່ຽວກັບແຜນຮັບມືສຸກເສີນ. ໃນກໍລະນີເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບລະບຽບການ, ມາດຕະຖານທີ່ກ່ຽວຂ້ອງ ແລ້ວຂະແໜງການທີ່ກ່ຽວຂ້ອງຕ້ອງແນະນຳ ແລະ ມີຄຳເຫັນ ພ້ອມທັງແຈ້ງໃຫ້ຜູ້ພັດທະນາເຂື່ອນ ປັບປຸງ, ແກ້ໄຂ ພາຍໃນເວລາສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ.

ພາຍຫຼັງແຜນຮັບມືສຸກເສີນໄດ້ຮັບການຮັບຮອງແລ້ວ ຜູ້ພັດທະນາເຂື່ອນຕ້ອງເຜີຍແຜ່ແຜນຮັບມືສຸກເສີນ ແລະ ສາມາດດຳເນີນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານ ຕາມແຕ່ລະກໍລະນີ.

**ມາດຕາ 48 ການປັບປຸງແຜນຮັບມືສຸກເສີນ**

ໃນໄລຍະການດຳເນີນການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ຫາກເຫັນວ່າແຜນຮັບມືສຸກເສີນມີເນື້ອໃນບໍ່ສອດຄ່ອງ ຜູ້ພັດທະນາເຂື່ອນ ຕ້ອງປັບປຸງແຜນຮັບມືສຸກເສີນແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາຮັບຮອງຄືນໃໝ່.

ຂັ້ນຕອນ ແລະ ເນື້ອໃນລະອຽດ ຂອງການປັບປຸງແຜນຮັບມືສຸກເສີນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການຝຶກຊ້ອມ ແລະ ການຈັດຕັ້ງປະຕິບັດ ແຜນຮັບມືສຸກເສີນ

**ມາດຕາ 49 ການຝຶກຊ້ອມແຜນຮັບມືສຸກເສີນ**

ພາຍຫຼັງແຜນຮັບມືສຸກເສີນ ໄດ້ຮັບການຮັບຮອງແລ້ວ ໃຫ້ຜູ້ພັດທະນາເຂື່ອນດຳເນີນການຝຶກຊ້ອມການປະຕິບັດແຜນຮັບມືສຸກເສີນຕົວຈິງຮ່ວມກັບຂະແໜງການ, ປະຊາຊົນທີ່ອາດໄດ້ຮັບຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມເນື້ອໃນຂອງແຜນຮັບມືສຸກເສີນ ທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້.

ການຝຶກຊ້ອມປະຕິບັດແຜນຮັບມືສຸກເສີນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 50 ການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ**

ໃນການຕອບໂຕ້ ຫຼື ແກ້ໄຂເຫດສຸກເສີນ ຜູ້ພັດທະນາເຂື່ອນ ຕ້ອງປະເມີນ ແລະ ກຳນົດເຫດການທີ່ເກີດຂຶ້ນໃຫ້ໄວເທົ່າທີ່ຈະໄວໄດ້ ແລ້ວນຳໃຊ້ວິທີການປ້ອງກັນ ແລະ ແກ້ໄຂຕາມທີ່ໄດ້ກຳນົດໄວ້ຢູ່ໃນແຜນຮັບມືສຸກເສີນໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນການ.

ການປະຕິບັດແຜນຮັບມືສຸກເສີນ ແມ່ນປະກອບດ້ວຍສີ່ຂັ້ນຕອນ ດັ່ງນີ້:

1. ຂັ້ນຕອນທີ 1: ການກວດກາເຫດການ, ການປະເມີນຜົນ ແລະ ການກຳນົດລະດັບເຫດສຸກເສີນ;
2. ຂັ້ນຕອນທີ 2: ການແຈ້ງເຕືອນ ແລະ ປະສານງານ;
3. ຂັ້ນຕອນທີ 3: ການປະຕິບັດງານສຸກເສີນ;
4. ຂັ້ນຕອນທີ 4: ການສິ້ນສຸດເຫດການ ແລະ ການຕິດຕາມຜົນ.

ໃນກໍລະນີເກີດເຫດສຸກເສີນ ຜູ້ພັດທະນາເຂື່ອນ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດຕາມແຜນຮັບມືສຸກເສີນຢ່າງຮີບດ່ວນ ພ້ອມທັງປະສານສົມທົບກັບຄະນະກຳມະການຄຸ້ມຄອງໄພພິບັດຂັ້ນຕ່າງໆ ແລະ ຂະແໜງການກ່ຽວຂ້ອງ ເພື່ອຫຼຸດຜ່ອນຜົນກະທົບຕ່າງໆທີ່ເກີດຂຶ້ນ ຕາມລະດັບຂອງເຫດການສຸກເສີນ.

ງົບປະມານໃນການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ ແມ່ນ ຄວາມຮັບຜິດຊອບຂອງຜູ້ພັດທະນາເຂື່ອນ.

ຂັ້ນຕອນ ແລະ ເນື້ອໃນລະອຽດການຈັດຕັ້ງປະຕິບັດແຜນຮັບມືສຸກເສີນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ການກວດສອບ ແລະ ການກວດກາ ດ້ານຄວາມປອດໄພຂອງເຂື່ອນ

**ມາດຕາ 51 ປະເພດ ແລະ ເນື້ອໃນການກວດສອບ ແລະ ການກວດກາ**

ຜູ້ພັດທະນາເຂື່ອນ ຕ້ອງກວດສອບ ແລະ ກວດກາ ດ້ານຄວາມປອດໄພຂອງເຂື່ອນໃນທຸກໄລຍະຂອງການພັດທະນາເຂື່ອນ ຊຶ່ງປະກອບດ້ວຍສີ່ປະເພດ ການກວດສອບ ແລະ ການກວດກາ ດັ່ງນີ້:

1. ການກວດສອບ ແລະ ການກວດກາ ເປັນປະຈຳ;
2. ການກວດສອບ ແລະ ການກວດກາ ເປັນໄລຍະ;
3. ການກວດສອບ ແລະ ການກວດກາ ແບບພິເສດ;
4. ການກວດສອບ ແລະ ການກວດກາ ຢ່າງລະອຽດ ແລະ ຄົບຖ້ວນ;

ຜູ້ພັດທະນາເຂື່ອນຕ້ອງດຳເນີນ ການກວດສອບ ແລະ ການກວດກາ ຢ່າງລະອຽດ ແລະ ຄົບຖ້ວນ ຕາມກຳນົດເວລາ ດັ່ງນີ້:

1. ເຂື່ອນທີ່ມີຄວາມສ່ຽງຮ້າຍແຮງ ໃຫ້ດຳເນີນທຸກ ຫ້າປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ;
2. ເຂື່ອນທີ່ມີຄວາມສ່ຽງສູງ ໃຫ້ດຳເນີນທຸກແປດປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ;
3. ເຂື່ອນທີ່ມີຄວາມສ່ຽງກາງ ໃຫ້ດຳເນີນທຸກສິບປີ ພາຍຫຼັງການກັກເກັບນ້ຳ ຫຼື ພາຍຫຼັງເກີດເຫດການໄພພິບັດໃດໜຶ່ງທີ່ຮ້າຍແຮງ;

ອ່ານຕໍ່ສະບັບໜ້າ




# ຄວາມໂລບ ພາໃຫ້ຄົນຄິດໃກ້ໃຈບອດ

\# ດັ້ນກິບເມກ



ຄວາມໂລບທີ່ຢາກໄດ້ເກີນກຳລັງ ເກີນຂອບເຂດຄວາມເໝາະສົມ ຈົນລະເມີດສິດທິຄົນອື່ນ ແລະ ບັງບຽດຂົ່ມຂູ່ເອົາຂອງຄົນອື່ນ ດ້ວຍວິທີການຕ່າງໆ ມັນຈະຊະນະໃນໄລຍະສັ້ນແຕ່ພ່າຍແພ້ໃນອະນາຄົດ ໄລຍະຍາວເຊັ່ນວ່າ: ເມື່ອຄົນເຮົາເຫັ່ນເຫັນວັດຖຸເງິນຄຳ ພາໃຫ້ສະບາຍ ສວຍງາມຫຼູຫຼາ ເຂົາກໍແຂ່ງຂັນກັນທຸກວິທີທາງ ເພື່ອໃຫ້ມີສັກສີເໜືອຄູ່ແຂ່ງ ບາງກໍລະນີພາໃຫ້ຊີວິດສັ້ນຈົນບໍ່ໄດ້ເສບສຸກໃນຊັບທີ່ຫາມາ.

ຜູ້ຂຽນຢາກອະທິບາຍ: ເຖິງລັກສະນະສັນຍານເຕືອນຂອງຄວາມໂລບເລີ່ມຄອບງຳ ເຊັ່ນວ່າ: ຄົນເຮົາຄິດເກີນຄວາມພໍດີຄິດເກີນກຳລັງຢາກໄດ້ຝ່າຍດຽວ ຈົນລະເມີດສິດຄົນອື່ນ ສິ່ງທີ່ຕາມເງົາຕິດກັນມາເປັນຄູ່ຝາແຝດຂອງຄວາມໂລບຄື ຄວາມອິດສາບັງບຽດ; ຄວາມໂລບ ຈະເຮັດໃຫ້ຄົນເຮົາຂາດຄວາມເຫັນໃຈຜູ້ອື່ນ ແລະ ຈະບໍ່ຄິດຄຳນຶງເຖິງພຶດຕິກຳຕົນເອງທີ່ລະເມີດສິດຄົນອື່ນ ສັນຍານເຕືອນອີກອັນໜຶ່ງຂອງຄວາມໂລບໃນໂຕຄົນ ຈະບໍ່ເຄີຍພໍໃຈໃນສິ່ງທີ່ຕົນມີ; ຫາໄດ້ໂກງໄດ້ງ່າຍ ບົ່ງການຄົນໄດ້ເກັ່ງ, ຄົນທີ່ມີຄວາມໂລບຄອບງຳ ຈະເບິ່ງ ແລະ ຄິດສັ້ນໆ ຄິດຈະເອົາໃຫ້ໄດ້ທັນໃຈ ພຽງແຕ່ຄິດວ່າ ຜົນກະທົບຕາມມາ ປະປ່ອຍໃຫ້ເປັນບາບກຳພາລະຄົນອື່ນ.

ຄວາມໂລບເປັນຝາແຝດຄູ່ກັນມາກັບຄວາມໂກດແຄ້ນ ແລະ ຄວາມຫຼົງ ເຊິ່ງເຊື່ອງຊ້ອນມາກັບອຳນາດປາລະມີໃນໂຕຄົນ ແຕ່ບໍ່ແມ່ນປັນຍາ ມັນຈະເບິ່ງບໍ່ເຫັນຜົນໄລຍະຍາວເຊັ່ນວ່າ: ຫຼົງເຫົ່າພຶດພັນປຸງແຕ່ງສວຍງາມກິນງ່າຍ ໄດ້ໄວທັນໃຈ ແລ້ວຫຼົງລືມຖິ້ມປະພືດພັນພື້ນເມືອງ ກວ່າຈະຮູ້ສຶກໂຕສຳນຶກໄດ້ ພັນພື້ນເມືອງກໍເກືອບບໍ່ເຫຼືອໃຫ້ເຫັນແລ້ວ, ພືດພັນພື້ນເມືອງອາດເກີດຊ້າໃຊ້ເວລາ ແຕ່ຈະໃຫ້ຜົນຍາວນານ ເຊິ່ງຢ່າລືມວ່າ ໂລກແຂ່ງຂັນກັນທຸກມື້ບໍ່ແມ່ນທາງອາວຸດ-ເສດຖະກິດການຄ້າ ຫຼື ອຳນາດອິດທິພົນການເມືອງໂລກຢ່າງດຽວ ແຕ່ບັນຫາຊີວະນາໆພັນກໍຄອບງຳກັນຈົນບາງຄົນບໍ່ຮູ້ໂຕ.

ສັງລວມວ່າ: ມີພຽງປັນຍາຮູ້ແຈ້ງ ມີພຽງສະຕິຕັກເຕືອນຮັບຟັງ ເຮັດໃຫ້ຄົນຕື່ນຈາກຄວາມຫຼົງ ກັບມາຮູ້ຄຸນຄ່າພື້ນບ້ານ ພື້ນເມືອງຂອງຕົນທີ່ມີຄ່າມະຫາສານ!

## ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ສະຫຼົດໃຈ | ສະລົດໃຈ |
| ເດີກສະຫງັດ | ເດີກສະງັດ |
| ບັງຄັບບັນຊາ | ບັງຂັບບັນຊາ |
| ໄປຕະຫຼາດ | ໄປຕະລາດ |
| ຜະດຸງຄັນ | ພະດຸງຄັນ |
| ຜັກສະຫຼັດ | ຜັກສະລັດ |
| ຝົດເຂົ້າ | ຟົດເຂົ້າ |
| ໝົກໄກ່ | ມົກໄກ່ |
| ທຳສະໝຸດ | ທຳສະມຸດ |

# ທວນຄືນປະຫວັດສາດ

ໂດຍ: ຜູ້ອື່ນ

ໃນຄໍລຳ 108 ສາລະສະບັບນີ້ ຜູ້ຂຽນນຳເອົາເຫດການສຳຄັນທາງປະຫວັດສາດມານຳສະເໜີໃຫ້ແກ່ບັນທ່ານໄດ້ອ່ານນຳກັນ ເພື່ອເປັນການທວນຄືນປະຫວັດແຫ່ງໄຊຊະນະການຕໍ່ສູ້ອັນພິລະອາດຫານດ້ວຍຄວາມສາມັກຄີແລະເສຍສະຫຼະອັນໃຫຍ່ຫຼວງຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ.

ທ້າຍສະຕະວັດທີ IX ພວກລ່າເມືອງຂຶ້ນຝຣັ່ງ ໄດ້ເຂົ້າມາຮຸກຮານ ແລະ ຢຶດຄອງເອົາປະເທດລາວເປັນຫົວເມືອງຂຶ້ນ ເຮັດໃຫ້ປະເທດລາວສູນເສຍຄວາມເປັນເອກະລາດ, ປະຊາຊົນຂາດອິດສະຫຼະພາບ ກາຍເປັນຂ້ອຍຂ້າມ້າໃຊ້ຂອງຈັກກະພັດຕ່າງດ້າວ ແຕ່ດ້ວຍມູນເຊື້ອບໍ່ຍອມຈຳນົນຂອງປະຊາຊົນລາວບັນດາເຜົ່າ ຈຶ່ງໄດ້ພາກັນລຸກຮື້ຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງເນື່ອງນິດລຽນຕິດ ຍິ່ງພວກເຂົາເພີ່ມທະວີການຢຶດຄອງ ແລະ ປຸກລະດົມຫຼາຍຂຶ້ນທໍ່ໃດ ກໍເຮັດໃຫ້ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ຍິ່ງເປີດກວ້າງອອກໄປທຸກຫົນທຸກແຫ່ງໃນຂອບເຂດທົ່ວປະເທດ.

ພາຍຫຼັງມະຫາປະຕິວັດເດືອນຕຸລາ ປີ 1917 ໄດ້ຮັບໄຊຊະນະ ແລະ ສະຫະພາບໂຊວຽດໄດ້ເກີດເປັນລັດສັງຄົມນິຍົມທຳອິດຂອງໂລກ ແລະ ໃນປີ 1930 ພັກກອມມູນິດອິນດູຈີນໄດ້ກຳເນີດຂຶ້ນ ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນບັນດາປະເທດໃນອິນດູຈີນມີແນວທາງ ແລະ ມີຍຸດທະສາດອັນຈະແຈ້ງ; ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າໄດ້ກ້າວເຂົ້າສູ່ໄລຍະໃໝ່ ດ້ວຍຄຸນນະພາບອັນໃໝ່ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະພັກແຄວ້ນລາວ ໄດ້ເຕົ້າໂຮມ ແລະ ຈັດຕັ້ງນຳພາປະຊາຊົນ, ບັນດາຊັ້ນຄົນລຸກຮື້ຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງພິລະອາດຫານ, ເນື່ອງນິດລຽນຕິດ ແລະ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວກວ້າງອອກໄປໃນທົ່ວປະເທດ.

ຕົ້ນປີ 1945 ກອງທັບໂຊວຽດໄດ້ຜາບແພ້ພວກຟາດຊິດເຢຍລະມັນ ໃນສົງຄາມໂລກຄັ້ງທີ II ແລະ ຢູ່ຫວຽດນາມກໍໄດ້ຮັບໄຊຊະນະໃນການປະຕິວັດເດືອນສິງຫາ ແລະ ປະກາດສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນຫວຽດນາມຂຶ້ນ ໃນວັນທີ 2 ກັນຍາ 1945; ຢູ່ ສປປ ລາວ ພັກເຮົາໄດ້ເດັດດ່ຽວນຳພາປະຊາຊົນເຮົາລຸກຮື້ຂຶ້ນຕໍ່ສູ້ ໂດຍເລີ່ມຈາກຂະບວນການຕໍ່ສູ້ຂອງກຳມະກອນ ແລະ ການໂຮມຊຸມນຸມໃຫຍ່ ວັນທີ 23 ສິງຫາ 1945 ແລະ ຂະບວນການຢຶດອຳນາດກໍໄດ້ແຜ່ລາມໄປຫຼາຍແຂວງ ເປັນຕົ້ນແມ່ນແຂວງສະຫວັນນະເຂດ, ທ່າແຂກ ແຂວງຄຳມ່ວນ, ຊຳເໜືອ ແຂວງຫົວພັນ ແລະ ແຂວງອື່ນໆໃນທົ່ວປະເທດ ອັນເປັນເງື່ອນໄຂໃຫ້ແກ່ການລຸກຮື້ຂຶ້ນຢຶດອຳນາດຈາກພວກລ່າເມືອງຂຶ້ນ ແລະ ປະກາດຄວາມເປັນເອກະລາດແຫ່ງຊາດ.

ວັນທີ 12 ຕຸລາ 1945 ໄດ້ກາຍເປັນເຫດການທີ່ມີຄວາມໝາຍທາງປະຫວັດສາດຂອງຊາດລາວ ເພາະເປັນມື້ທີ່ມີການໂຮມຊຸມນຸມທີ່ສະໜາມກິລາແຫ່ງຊາດ (ສະໜາມກິລາເຈົ້າອານຸວົງໃນປັດຈຸບັນ) ເຊິ່ງມີມວນຊົນເຂົ້າຮ່ວມສອງໝື່ນກວ່າຄົນ ໃນມື້ນັ້ນ, ລັດຖະບານລາວອິດສະຫຼະ ໄດ້ເປັນຕົວແທນໃຫ້ແກ່ວົງຄະນະຍາດແຫ່ງຊາດ ປະກາດຄວາມເປັນເອກະລາດຂອງແຜ່ນດິນລາວຕໍ່ໂລກຢ່າງເປັນທາງການ, ປະກາດທ້ອນໂຮມແຜ່ນດິນລາວເປັນເອກະພາບ; ພ້ອມນັ້ນ, ກໍໄດ້ອອກຖະແຫຼງການກ່ຽວກັບການປ່ຽນແປງການປົກຄອງ, ລົບລ້າງທຸກໆສັນຍາທີ່ລາວເຊັນກັບຝຣັ່ງ, ປະກາດໃຊ້ທຸງຊາດ ແລະ ປະກາດແຕ່ງຕັ້ງຄະນະລັດຖະບານຊົ່ວຄາວ ໂດຍມີສະເດັດເຈົ້າສຸພານຸວົງ ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ຕໍ່ມາດຳລົງຕຳແໜ່ງເປັນຜູ້ບັນຊາການທະຫານສູງສຸດ.

ການປະກາດເອກະລາດໃນວັນທີ 12 ຕຸລາ 1945 ໄດ້ເຮັດໃຫ້ຊາວໂລກຮັບຮູ້ກ່ຽວກັບຄວາມເປັນຊາດລາວ ທັງຮັບຮູ້ຄະນະລັດຖະບານຊົ່ວຄາວຂອງລາວ ແລະ ຮັບຮູ້ວ່າຊາດລາວ-ຄົນລາວ ກໍເປັນຄົນທີ່ມີກຽດສັກສີຄືກັນກັບຊາດອື່ນ ແລະ ຢາກມີອິດສະຫຼະພາບ, ເປັນເຈົ້າຊາຕາກຳຂອງຕົນເອງ ແລະ ຢາກມີການພັດທະນາຕົນເພື່ອຄວາມຢູ່ດີກິນດີແລະຄວາມຈະເລີນວັດທະນາ; ດັ່ງນັ້ນ, ວັນທີ 12 ຕຸລາ 1945 ຈຶ່ງເປັນວັນສຳຄັນປະຫວັດສາດຂອງຊາດ ເປັນວັນແຫ່ງຄວາມເອກອ້າງທະນົງໃຈຕໍ່ຄວາມອາດຫານຊານໄຊໃນການຕໍ່ສູ້ບົນຈິດໃຈຍອມຕາຍດີກວ່າເປັນຂ້ອຍຂ້າ, ຕາຍເພື່ອເອກະລາດດີກວ່າຢູ່ພາຍໃຕ້ແອກປົກຄອງຂອງຕ່າງຊາດ ເຊິ່ງໄດ້ກາຍເປັນມູນເຊື້ອແຫ່ງການຕໍ່ສູ້ຢ່າງມີໄຊຂອງຄົນລາວຜູ້ຮັກຊາດ ພາຍໃຕ້ການນຳພາຂອງພັກ, ສາມາດປົດປ່ອຍຊາດໄດ້ຢ່າງສົມບູນ ແລະ ສະຖາປານາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເປັນຕົ້ນມາ.





ສຸກສະບາຍຫາຍໂຣຄາ

# ທ່ານອນຜິດໆ

#ສາວແອ່ນ



ການນອນ ເປັນການພັກຜ່ອນທີ່ດີທີ່ສຸດ ແລະ ງ່າຍທີ່ສຸດ ເປັນຊ່ວງເວລາທີ່ດີທີ່ສຸດຂອງຮ່າງກາຍທີ່ຈະໄດ້ສ້ອມແຊມໂຕເອງ ການນອນທີ່ເໝາະສົມໂດຍສະເລ່ຍແລ້ວແມ່ນ 7-8 ຊົ່ວໂມງຕໍ່ມື້ ເທົ່າກັບເຮົາໃຊ້ເວລາ ¼ ຂອງແຕ່ລະມື້ໃນການນອນ ດັ່ງນັ້ນ, ການນອນທີ່ຖືກຕ້ອງ ແລະ ເໝາະສົມ ຈຶ່ງມີຄວາມສຳຄັນເປັນຢ່າງຍິ່ງ ເພາະຈະເຮັດໃຫ້ມີສຸຂະພາບດີຂຶ້ນ ບໍ່ມີອາການເຈັບຂອງກະດູກ, ກ້າມຊີ້ນ ຫຼື ລະບົບປະສາດໃນສ່ວນຕ່າງໆຂອງຮ່າງກາຍ ແຕ່ບາງທ່ານອາດຈະສົງໄສວ່າເປັນຫຍັງຍິ່ງນອນຍິ່ງເມື່ອຍ ນັ້ນອາດເປັນເພາະເຮົານອນຜິດທ່າ ຫຼື ນອນໃນທ່າທີ່ບໍ່ຖືກຕ້ອງ ລວມເຖິງບ່ອນນອນທີ່ບໍ່ເໝາະສົມກັບການພັກຜ່ອນ ສະນັ້ນ, ໃນສຸກສະບາຍຫາຍໂຣຄາສະບັບນີ້ ເຮົາມີ 4 ທ່ານອນ ທີ່ກໍ່ໃຫ້ເກີດບັນຫາຕໍ່ສຸຂະພາບຂອງທ່ານ ມານຳສະເໜີໃຫ້ແກ່ທ່ານໄດ້ຮັບຮູ້ນຳກັນ.

**ທ່າທີ 1: ການນອນຂົດລົ່ນ**

ເປັນທ່ານອນທີ່ບໍ່ເໝາະສົມທີ່ສຸດ ເພາະຈະສົ່ງຜົນເສຍຕໍ່ຮ່າງກາຍໃນຫຼາຍໆດ້ານ ເຊິ່ງຈະກໍ່ໃຫ້ເກີດຜົນເສຍດັ່ງນີ້:

- ປວດຫົວເຂົ່າ, ເອັນບໍລິເວນຫົວເຂົ່າ ແລະ ສະໂພກເກີດການອັກເສບ ເນື່ອງຈາກມີການພັບງໍເຂົ່າເປັນເວລາດົນ;
- ກ້າມຊີ້ນຫຼັງເບື້ອງລຸ່ມອັກເສບ ແລະ ເຈັບ ເນື່ອງຈາກມີການຂົດງໍຂອງຫຼັງ ເຮັດໃຫ້ກ້າມເນື້ອຖືກຢຽດອອກຈົນຕຶງ;
- ກະດູກສັນຫຼັງມີການບິດງໍຜິດຮູບ;
- ປວດກ້ານຄໍຈາກກ້າມເນື້ອອັກເສບ ເນື່ອງຈາກການກົ້ມຫົວເປັນເວລາດົນ ເຮັດໃຫ້ກ້າມຊີ້ນຄໍຕຶງ ແລະ ຍັງໄປເພີ່ມແຮງກົດທັບຕໍ່ໝອນຮອງກະດູກສ່ວນຫຼັງບ່ອນຄໍ ຕື່ມອີກ;

**ທ່າທີ 2: ນອນຄວ້ຳ**

ທ່ານີ້ ຈະເຮັດໃຫ້ຫາຍໃຈລຳບາກ, ກະດູກສັນຫຼັງແອ່ນຫຼາຍກວ່າປົກກະຕິ ແລະ ໃນຕອນທີ່ນອນ ກໍຕ້ອງມີການບິດຄໍໄປດ້ານຊ້າຍ ຫຼື ຂວາ ລວມເຖິງການແອ່ນໄປທາງຫຼັງອີກດ້ວຍ ຈຶ່ງອາດຈະພາໃຫ້ເກີດການອັກເສບຂອງກ້າມເນື້ອບໍລິເວນຄໍ ພາໃຫ້ເກີດອາການປວດຄໍ ແລະ ຫຼັງໄດ້.

**ທ່າທີ 3: ການນອນແບບເຄິ່ງນັ່ງເຄິ່ງນອນ**

ທ່ານອນເຄິ່ງນັ່ງເຄິ່ງນອນໂດຍມີໝອນຮອງຫຼັງ ແລ້ວນອນເອນຫຼັງ ແລະ ເລືອລົງເທິງຕຽງ ຫຼື ໂຊຟາ ພ້ອມກັບການຫຼິ້ນໂທລະສັບມືຖື, ອ່ານໜັງສື ຫຼື ເບິ່ງໂທລະພາບໄປເລື້ອຍໆ ເຮັດໃຫ້ຜູ້ທີ່ນອນທ່ານີ້ຕ້ອງງໍ ຫຼື ງຽງຄໍເປັນເວລາດົນ ເຊິ່ງຖ້າເຮັດເປັນປະຈຳ ຈະເຮັດໃຫ້ໝອນຮອງກະດູກສັນຫຼັງສ່ວນຄໍ ແລະ ແຜ່ນຫຼັງເຮັດວຽກຫຼາຍກວ່າປົກກະຕິ ອັນສົ່ງຜົນໃຫ້ເກີດການອັກເສບ ແລະ ເຈັບຢູ່ໃນກ້າມຊີ້ນຄໍ ແລະ ບ່າ ພ້ອມທັງ ອາດເຮັດໃຫ້ເກີດອາການເຈັບຫຼັງນຳອີກ.

**ທ່າທີ່4: ນອນທັບແຂນໂຕເອງ**

ການກົດທັບແຂນເປັນເວລາດົນ ເຊິ່ງເປັນບໍລິເວນທີ່ມີເສັ້ນປະສາດ ການນອນເຕັງ ຫຼື ການພາດແຂນເທິງຕັ່ງເປັນເວລາດົນ ຈະກໍໃຫ້ເກີດອາການທາງລະບົບປະສາດ ທີ່ພົບເຫັນຫຼາຍທີ່ສຸດຄື ອາການຂໍ້ມືຕົກ ແລະ ຍົກມືບໍ່ຂຶ້ນ.

**ຂໍ້ມູນຈາກ: www.thairath.co.th**




# ຊົມເຊີຍຄູ

**# ສາວຄູ ວັງຄົກລົ່ນ**

❊ ຄຳວ່າຄູເລີດລ້ຳ
ໃຜກໍອາໄສຄູ
ຄຸນຄູຫຼາຍເຫຼືອລົ້ນ
ເອົາທາລາ ແລະ ແຜ່ນຟ້າ

ສູງສົ່ງຄວາມໝາຍ
ສິດສອນຄວາມຮູ້
ພະສຸທາມິທຽມເທົ່າ
ພູເຂົາກວ້າງທຽບບໍ່ປານ ເຈົ້ານາ

❊ ຄູນັ້ນ ເປັນແມ່ເບົ້າ
ຄູມີໃຈສະແຫວງຫາ
ເຖິງອິດເມື່ອຍມີຖອຍທໍ້
ຄູຍັງເດີນຍ່າງກ້າວ

ຫຼອມຫຼໍ່ຄົນດີ
ຊອກວິຊາເລີງເລື້ອຍ
ຖອນຕົວໜີຫ່າງ
ຄຽງຂ້າງໝູ່ນັກຮຽນ ແທ້ແລ້ວ

❊ ຄູເປັນຫຼາຍກວ່າຜູ້ຮູ້
ຄູນັ້ນເປັນມານດາ
ຍາມສິດທຳຕົນດື້
ຄູຫົນຫວາຍຫ່ວງເຈົ້າ

ສອນສັ່ງວິຊາການ ແທ້ໃດ
ຊ່ວຍເຫຼືອຊູຄ້ຳ
ຫຼືກາຍາໂຊມປ່ວຍ
ດຽວດ້າມລູກຄືງ ແທ້ນາ

❊ ເຖິງວ່າ ກາຍອ່ອນລ້າ
ວຽກຄອບຄົວເຮືອນຊານ
ຄູບໍ່ເອົາມາປົນເບື້ອງ
ຄູບໍ່ສານສອດກ້ຽວ

ບັນຫາຢູ່ເຕັມຕົວ
ອັ່ງອໍ່ນອງລົ້ນ
ການຮຽນ-ຂຽນອ່ານ
ເຄືອງແຄ້ນໜ່ອຍໃຈ ດອກນາ

❊ ແມ່ນວ່າ ຄູຢູ່ແຄວ້ນ
ຄູບໍ່ເຄີຍມືວໝອງ
ຄູຍັງເອົາໃຈຕັ້ງ
ສົມເປັນຄູແນ່ແທ້

ແດນດ່ານດິນດອຍ
ໝັ່ນອຸລາຊົມເສົ້າ
ອຸດົມການອັນໂດດເດັ່ນ
ຊູຄ້ຳຄູ່ປະຊາ ນັ້ນນໍ

❊ ຮຽມຂໍຍໍຍົກຍ້ອງ
ຜົນງານຄູເກີນບັນຍາຍ
ຂໍກ່າວຊົມເຊີຍເຈົ້າ
ຄົນເກີດໃນລຸ່ມຟ້າ

ຈາກ່າວສັນສະເສີນ
ກ່າຍຮຽງຄຳເວົ້າ
ບິດາມາດາຄົນປະເສີດ
ຊົມເຊີຍເຈົ້າພໍ່ແມ່ຄູ ແທ້ແລ້ວ






## ໜັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

❊ *ບຸນອອກພັນສາ ທີ່ອສາຫາມີການ **ທ້າງຫາກະກຽມຢ່າງພົດພົ້ນ** ແລະ ປະເພນີຊ່ວງເຮືອທ່າວັດຈັນ ຈະມີການ**ຄົບງັນຢ່າງຄຶກຄື້ນ** ໃນຕອນ**ຄ່ຳວັນທີ 29 ຕຸລາ** ຫຼາຍບ່ອນຕົບແຕ່ງເອ້ ປະດັບລວດລາຍງາມ **ຕາມອາຄານທໍໂຮງ** ເດີ່ນອາຮາມກວ້າງ ດອກດວງມາລາໄມ້ **ກຽມກະໂທງລອຍຄູ່** ໃຜຜູ້ມີຊູ້ແລ້ວ ຊີທົວແຍ້ມມ່ວນໃຈ **ແລນ່!***

## ຊອບຍິ້ມ

# ແອ່ບຕຸ້ງ

### ຍ້ອນເຮັດຄົບໂພດ

ທ້າວແປະໄປຊື້ກາລະເປົາ ພໍກັບເມືອຮອດເຮືອນປາກົດວ່າມັນບູດ ເລີຍເອົາມາສົ່ງຄືນ

**ທ້າວແປະ:** ກາລະເປົາລຸງບູດ ກິນບໍ່ໄດ້ ຂໍສົ່ງຄືນ

**ຄົນຂາຍ:** ມຶງຢ່າມາດູຖູກກູບັກຫຳນ້ອຍ ກູເຮັດກາລະເປົານີ້ແຕ່ມຶງບໍ່ທັນເກີດພຸ້ນ

**ທ້າວແປະ:** ກະທັ້ນລະ ຍ້ອນລຸງເຮັດຄົບໂພດ ມັນຈຶ່ງບູດ

**ຄົນຂາຍ:** ???



ຄະຕິເຕືອນໃຈ

#ດອກຫຍ້າ

ໃນໂຫໂຫໂສນີ້ ຊີພາໂຕຕົກຕ່ຳ
ປຽບດັ່ງເສືອໂຄ່ງຮ້າຍ ຕາຍຍ້ອນກະຕ່າຍລວງ ແທ້ໃດ




# ປາກົດການ

"ປາກົດການ" ເປັນຄຳປະສົມແບບສະໜາດປະເພດຄຳນາມ ປະກອບດ້ວຍຄຳວ່າ "ປາກົດ" ຈາກເຄົ້າປາລີ *Pākaṭa* (ປາກະຕະ) ແລ້ວແປງສຽງເປັນຄຳລາວວ່າ "ປາກົດ" ໝາຍເຖິງ "ສະແດງອອກມາໃຫ້ເຫັນ" ແລະ "ການ" ຈາກເຄົ້າປາລີ *Kāraṇa* (ກາຣະນະ) ແລ້ວແປງສຽງເປັນລາວວ່າ "ການ" ໝາຍເຖິງ "ເຄົ້າ, ມູນ, ເຫດ". ເມື່ອສອງຄຳນີ້ມາສະໜາດເຂົ້າກັນເປັນ "ປາກົດການ" ກໍໄດ້ຄວາມໝາຍວ່າ "ເຫດການທີ່ສະແດງອອກມາໃຫ້ເຫັນແຈ້ງ" ເຊັ່ນ

- ສຸລິຍະຄາດ ຫຼືກົບກິນຕາເວັນເປັນປາກົດການທຳມະຊາດທີ່ເກີດຂຶ້ນບໍ່ເລື້ອຍປານໃດ.
- ກໍ່ເຫດປຸ້ນຊັບພົນລະເມືອງ ເປັນປາກົດການຫຍໍ້ທໍ້ໜຶ່ງທີ່ທາງເຈົ້າໜ້າທີ່ຕຳຫຼວດພະຍາຍາມແກ້ໄຂ.
- ຢູ່ໃນວິຊາພາສາສາດພື້ນຖານ ແລະ ທິດສະດີພາສາໄດ້ກ່າວວ່າ "ພາສາແມ່ນປາກົດການທາງສັງຄົມ, ບໍ່ແມ່ນປາກົດການທາງທຳມະຊາດ".

# WTO ປັບຫຼຸດການຄາດຄະເນການຄ້າໂລກ

ຕາມການລາຍງານຂ່າວເມື່ອທ້າຍອາທິດຜ່ານມາ ໃຫ້ຮູ້ວ່າ: ອົງການການຄ້າໂລກ (WTO) ໄດ້ປະກາດປັບຫຼຸດການຄາດຄະເນການຂະຫຍາຍຕົວຂອງການຄ້າໂລກໃນປີນີ້ສູ່ລະດັບ 0,8% ຈາກລະດັບ 1,7% ທີ່ມີການຄາດຄະເນໄວ້ເມື່ອເດືອນເມສາຜ່ານມາ.



WTO ລະບຸວ່າ: ການຄ້າໂລກໄດ້ຮັບຜົນກະທົບຈາກການປັບຂຶ້ນອັດຕາດອກເບ້ຍຂອງທະນາຄານກາງ ເຊິ່ງໄດ້ບັ່ນທອນກຳລັງການຊື້ຂອງຜູ້ບໍລິໂພກໃນອາເມຣິກາ, ເອີຣົບ ແລະ ອາຊີ. ນອກຈາກນີ້, WTO ຍັງໄດ້ເປີດເຜີຍວ່າ: ອັດຕາເງິນເຟີ້ທີ່ປັບຕົວຂຶ້ນຢ່າງຕໍ່ເນື່ອງໄດ້ເຮັດໃຫ້ທະນາຄານກາງຍັງຄົງຮັກສາອັດຕາດອກເບ້ຍໃນລະດັບສູງດົນກວ່າທີ່ຄາດຄະເນໄວ້ ແລະ ສະຖານະການໂລກໃນປັດຈຸບັນ ໄດ້ສົ່ງຜົນກະທົບຕໍ່ທ່າອ່ຽງການຄ້າໂລກ. WTO ລະບຸວ່າ: ການຊື້-ຂາຍສິນຄ້າຫຼຸດລົງໃນປີນີ້ ຍົກເວັ້ນຍານພາຫະນະ ເຊິ່ງມີຈຳນວນການຂາຍທີ່ເພີ່ມຂຶ້ນຊົດເຊີຍພາວະການຂາດແຄນທີ່ຈຳກັດການສົ່ງອອກໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19.

ຂະນະດຽວກັນ, WTO ໄດ້ຄາດຄະເນວ່າ: ເສດຖະກິດໂລກຈະຂະຫຍາຍຕົວ 3% ໃນປີນີ້ ແລະ 2,8% ໃນປີ 2024.

# ລັດຖະບານອິນໂດເນເຊຍ ເພີ່ມການສະໜອງເຂົ້າສານ

ອີງຕາມການລາຍງານວ່າໃຫ້ຮູ້ວ່າ: ເມື່ອບໍ່ດົນມານີ້, ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ປະກາດວ່າ: ລັດຖະບານ ຈະເພີ່ມທະວີການສະໜອງເຂົ້າສານໃນຕະຫຼາດພາຍໃນປະເທດ ເພື່ອເຮັດໃຫ້ລາຄາຜູ້ບໍລິໂພກມີສະຖຽນລະພາບໃນສະພາບການທີ່ລາຄາເຂົ້າເພີ່ມຂຶ້ນສູງ.



ຂ່າວລະບຸວ່າ: ອີງຕາມຂໍ້ມູນຂອງອົງການສະຖິຕິອິນໂດເນເຊຍ ໃຫ້ຮູ້ວ່າ: ລາຄາເຂົ້າທີ່ກະກຽມເຂົ້າໂຮງສີໃນເດືອນກັນຍາແມ່ນ 7.386 ຣູເປຍຕໍ່ກິໂລ (ເທົ່າກັບ 0,47 ໂດລາຕໍ່ກິໂລ), ເພີ່ມຂຶ້ນ 9,3% ເມື່ອທຽບໃສ່ເດືອນກ່ອນໜ້ານີ້. ທ່ານ ໂຈໂກ ວິໂດໂດ ໃຫ້ຮູ້ວ່າ: ເພື່ອແກ້ໄຂລາຄາເຂົ້າທີ່ເພີ່ມຂຶ້ນ, ລັດຖະບານຈະສະໜອງເຂົ້າສານໃຫ້ຕະຫຼາດຫຼາຍຂຶ້ນກວ່າເກົ່າ. ຍຸດທະສາດນີ້ໄດ້ຮັບການພິສູດແລ້ວວ່າມີປະສິດທິຜົນໃນການຫຼຸດລາຄາເຂົ້າຢູ່ຕະຫຼາດຂາຍສົ່ງ ຊິປີນາງ ທີ່ນະຄອນຫຼວງຈາກາຕາ.

ຄຽງຄູ່ກັບການຮັກສາສະຖຽນລະພາບຂອງລາຄາເຂົ້າແລ້ວ, ກະຊວງກະສິກຳອິນໂດເນເຊຍ ແລະ ບັນດາອົງການທີ່ກ່ຽວຂ້ອງພວມສົມທົບກັນຢ່າງຕັ້ງໜ້າເພື່ອຊຸກຍູ້ການຜະລິດເຂົ້າ ພ້ອມທັງຮັບປະກັນສະຫວັດດີການຂອງຊາວກະສິກອນ.




# ວິທີເຮັດວຽກ

### ພາກທີ 4
### ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

**ຈ) ພະຍາດຂີ້ຄ້ານ:**

ປາກົດການທີ່ສະແດງໃຫ້ເຫັນລັກສະນະຂອງພະຍາດຂີ້ຄ້ານເປັນຄືດັ່ງລຸ່ມນີ້:

- ຖືວ່າອັນໃດຕົນເອງກໍເກັ່ງພໍແລ້ວ, ວຽກອັນໃດຕົນເອງກໍຮູ້ພໍແລ້ວ, ຂີ້ຄ້ານຮຽນ, ຂີ້ຄ້ານພິຈາລະນາ, ວຽກການອັນໃດງ່າຍ ກໍຍາດເອົາມາໃຫ້ແຕ່ຕົນເອງ ວຽກອັນໃດຍາກ ກໍຊຸກໄປໃຫ້ຜູ້ອື່ນເຮັດ, ເມື່ອພົບສິ່ງທີ່ເປັນອັນຕະລາຍ ກໍຊອກຫາວິທີຫຼົບຫຼີກໄປ.
- ເມື່ອໄດ້ຮັບຄຳສັ່ງ ຫຼື ມະຕິຕົກລົງຂອງຂັ້ນສູງ ກໍບໍ່ມັກຄົ້ນຄວ້າເບິ່ງໃຫ້ແຈ່ມແຈ້ງ, ບໍ່ຮີບນຳສົ່ງຄຳສັ່ງ ຫຼື ມະຕິຕົກລົງນັ້ນລົງໄປໃຫ້ຂັ້ນລຸ່ມ, ໃຫ້ສະມາຊິກຂອງພັກ ແລະ ພົນທະຫານ, ມັກເອົາມ້ຽນໄວ້ນຳຕົວເອງ ໂດຍບໍ່ເອົາອອກມາອ່ານຄືນອີກ.

ເວລາປະຕິບັດຄຳສັ່ງ ກໍກະຕຸກກະຕັກ, ບໍ່ມ່ວນຊື່ນເບີກບານ ບໍ່ວ່ອງໄວ, ມັກປະຕິບັດພໍແລ້ວເລື່ອງ, ບໍ່ຕັ້ງໃຈໃສ່ເຖິງຕົ້ນປາຍ ຜົນທີ່ໄດ້ຮັບ ກ່ອນອື່ນກໍຄືມະຕິເຕັມຖົງໂສ້ງ, ຄຳສັ່ງເຕັມຖົງເສື້ອ.

ຜົນທີ່ໄດ້ຮັບມັນໜັກກໍຄື: ມ້າງເພການຈັດຕັ້ງຂອງພັກ, ຫຼຸດຜ່ອນລະບຽບວິໄນຂອງພັກ, ປະໃຫ້ເສຍໂອກາດທີ່ຄວນເຮັດ ກໍບໍ່ເຮັດ, ເວລາເຮັດກໍຫຼ້າຊ້າໄປແລ້ວ, ນັ້ນແມ່ນເປັນຍ້ອນແນວຄິດຂີ້ຄ້ານ ຊັກຊ້າ ຄົນເຮົາມີແນວນັ້ນ ກໍເພາະບໍ່ເຂົ້າໃຈວ່າ ພັກກໍຄືດຽວກັນຕົວຕົນເຮົາ, ມະຕິຕົກລົງ ແລະ ຄຳສັ່ງ ກໍຄືສາຍເລືອດ, ສາຍເລືອດແລ່ນດີ ໄປທົ່ວຕົນຕົວ ກໍເຮັດໃຫ້ຄົນບໍ່ເຈັບໄຂ້, ສາຍເລືອດຢຸດຢູ່ບ່ອນໃດ ບ່ອນນັ້ນກໍຈະເປັນເປ້ຍລ່ອຍ ແລະ ເກີດພະຍາດທັນທີ ມະຕິຕົກລົງ ແລະ ສັ່ງໄປໄວ, ໄປເຖິງແຕ່ຊັ້ນເທິງຫາຊັ້ນລຸ່ມ, ວຽກການກໍແລ່ນໄວ, ອັນໃດກໍແລ້ວທົ່ວຂໍ້ວດີ, ມັນຢຸດຊະງັກຢູ່ບ່ອນໃດ ຊັ້ນໃດຕັ້ງແຕ່ນັ້ນລົງມາເຖິງລຸ່ມ ກໍເປັນເປ້ຍເປັນລ່ອຍບໍ່ຮູ້ທາງໃດຈະເຮັດວຽກ.

ອ່ານຕໍ່ສະບັບໜ້າ...

# IOC ສະເໜີເງື່ອນໄຂ ສຳລັບບັນດາປະເທດທີ່ຈະເປັນເຈົ້າພາບຈັດໂອແລັມປິກ



ມີການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ຄະນະກຳມະການໂອແລັມປິກສາກົນ (IOC) ໄດ້ສະເໜີເງື່ອນໄຂ ສຳລັບບັນດາປະເທດທີ່ຈະເປັນເຈົ້າພາບຈັດງານແຂ່ງຂັນກິລາໂອແລັມປິກ ກ່ຽວກັບບັນດາປະເທດທີ່ຫັນເອົາກິລາເປັນການເມືອງແມ່ນຍາກທີ່ຈະຍາດແຍ່ງເອົາສິດຈັດງານໂອແລັມປິກ.

ບົດຄຳເຫັນໃນກອງປະຊຸມປະຈຳປີຂອງ IOC ເຊິ່ງຈັດຂຶ້ນຢູ່ນະຄອນມຸມໄບ ຂອງປະເທດອິນເດຍ, ທ່ານ ນາງ ໂກລິນດາ ກຣາບາ ກິຕາໂຣວິກ ສະມາຊິກຂອງ IOC ແລະ ເປັນອະດີດປະທານາທິບໍດີກຣົວຊີ ໃຫ້ຮູ້ວ່າ: IOC ໄດ້ຖືສຳຄັນກ່ຽວກັບການຫັນກິລາເປັນການເມືອງທີ່ນັບມື້ນັບເພີ່ມຂຶ້ນ ແມ່ນບັນຫາທີ່ຕ້ອງໄດ້ເອົາໃສ່ໃຈໃນບົດລາຍງານເຖິງບັນດາການນຳຂົງເຂດກິລາທົ່ວໂລກ ກ່ຽວກັບບັນດາປະເທດທີ່ຢາກຈະເປັນເຈົ້າພາບຈັດງານໂອແລັມປິກໃນອະນາຄົດ.

ກ່ອນໜ້ານັ້ນ, IOC ກໍໄດ້ສະເໜີຂັ້ນຕອນເລືອກຕັ້ງໃໝ່ເພື່ອຫຼີກລ່ຽງສະພາບການບັນດາປະເທດຂົນຂວາຍດຶງດູດບັດລົງຄະແນນສຽງ ດັ່ງນັ້ນ, ປະເທດທີ່ຈະເປັນເຈົ້າພາບຈັດໂອແລັມປິກ ແລະ ມີຄວາມສາມາດບົ່ມຊ້ອນ ຈະໄດ້ເຮັດວຽກແບບປິດລັບກັບ IOC ໂດຍອົດສະຕຣາລີ ແມ່ນປະເທດທຳອິດທີ່ໄດ້ຄັດເລືອກຕາມວິທີການນີ້ ແລະ ກາຍເປັນປະເທດເຈົ້າພາບຈັດໂອແລັມປິກ 2032.

## ເຫັນໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ມາດຕະການກໍາຈັດມົນລະພິດຈາກຟາມລ້ຽງສັດ ແລະ ລົດເພື່ອສິ່ງແວດລ້ອມທີ່ສົດໃສ

ພົບກັນໃນ "ຜູ້ແທນປະຊາຊົນ" ສະບັບນີ້, ຜູ້ຂຽນມີເລື່ອງເລົ່າທີ່ໜ້າສົນໃຈ ກ່ຽວກັບການແກ້ໄຂມົນລະພິດທາງອາກາດ ເພື່ອສິ່ງແວດລ້ອມທີ່ສົດໃສ ໄຮ້ສານສິ່ງປົນເປື້ອນທີ່ເປັນອັນຕະລາຍຕໍ່ຊີວິດຂອງຄົນໃນສັງຄົມເຊັ່ນ: ເລື່ອງມາດຕະການລຶບລ້າງເທື່ອລະກ້າວ ຍານພາຫະນະທີ່ແລ່ນດ້ວຍນໍ້າມັນກາຊວນ ຢູ່ກະໂຕນະຄອນຫລວງ ເຊອູນ (SEOUL) ສ. ເກົາຫຼີ ແລະ ຈະປິດທ້າຍດ້ວຍຂ່າວ ການແກ້ໄຂມົນລະພິດຈາກຟາມລ້ຽງສັດຢູ່ປະເທດ ນິວຊີແລນ.

ໃນປັດຈຸບັນ ບັນຫາສິ່ງແວດລ້ອມໄດ້ກາຍເປັນສິ່ງທ້າທາຍສະເພາະໜ້າທີ່ຫຍັບໃກ້ເຂົ້າມາຊັກໃຊ້. ແຕ່ກ່ອນ, ພໍໄດ້ຍິນເລື່ອງພູນໍ້າກ້ອນລະລາຍຢູ່ເຂດຂົ້ວໂລກ, ຫລາຍຄົນກໍຍັງເສີຍໆຢູ່, ເພາະຄິດວ່າເປັນເລື່ອງໄກຕົວ, ແຕ່ດຽວນີ້ຢູ່ເຂດຂົ້ວໂລກນັ້ນ ໄດ້ເກີດມີຕົ້ນໄມ້ໃບຫຍ້າ, ມີດອກໄມ້ບານເປັນທີ່ຮຽບຮ້ອຍແລ້ວ ເຊິ່ງໝາຍຄວາມວ່າ ບໍ່ພຽງແຕ່ພູນໍ້າກ້ອນເປື່ອຍເທົ່ານັ້ນ ແຕ່ມັນໄດ້ກາຍເປັນພື້ນທີ່ອົບອຸ່ນຈົນສາມາດໃຫ້ຊີວິດພືດພັນໄປແລ້ວ. ການປະກອບສ່ວນແກ້ໄຂບັນຫາໂລກຮ້ອນຍ້ອນມົນລະພິດຈາກນໍ້າມືຂອງມະນຸດເອງນັ້ນ ດໍາເນີນໄປໃນສອງຮູບແບບຄື ໜຶ່ງແມ່ນຮູບແບບກວມລວມລະດັບໂລກ. ຍົກຕົວຢ່າງ ການປະກອບສ່ວນທຶນຮອນທີ່ເປັນພັນທະຂອງບັນດາປະເທດຮັ່ງມີ ເພື່ອຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ແບບທີ່ສອງແມ່ນການເຄື່ອນໄຫວຂອງແຕ່ລະພາກພື້ນ ແລະ ແຕ່ລະປະເທດ ເພື່ອຫຼຸດຜ່ອນ ການປ່ອຍແກັສກາກບອນ ທີ່ເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ. ສໍາລັບຢູ່ປະເທດ ສ.ເກົາຫຼີ ໂດຍສະເພາະກໍແມ່ນຢູ່ກະໂຕນະຄອນຫຼວງ ເຊອູນ ທີ່ມີຍານພາຫະນະແລ່ນ-ແອອັດຍັດບຽດກັນປານເສັ້ນເຂົ້າປຸ້ນ ຕາມເສັ້ນທາງຕ່າງໆ ນັ້ນ, ກໍມີຂ່າວອອກມາໃນຕົ້ນປີ 2020 ວ່າ ອົງການປົກຄອງຂອງນະຄອນຫຼວງແຫ່ງນີ້ ໄດ້ເລີ່ມປະຕິບັດແຜນລຶບລ້າງເທື່ອລະກ້າວ ການໃຊ້ຍານພາຫະນະ ທີ່ແລ່ນດ້ວຍນໍ້າມັນ ກາຊວນ ຍ້ອນໄດ້ມີຜົນການຄົ້ນຄວ້າວ່າ ລົດທີ່ແລ່ນດ້ວຍນໍ້າມັນກາຊວນນັ້ນ ເປັນໂຕການສ້າງມົນລະພິດຢູ່ພາຍໃນນະຄອນຫຼວງ ໂດຍກວມເອົາ 64,6% ຂອງມົນລະພິດທີ່ເກີດຈາກຄວັນລົດທັງໝົດ. ແຜນລຶບລ້າງການນໍາໃຊ້ລົດທີ່ແລ່ນດ້ວຍນໍ້າມັນກາຊວນໃນນະຄອນຫລວງເຊອູນນັ້ນ ຈະເລີ່ມກັບລົດລັດທີ່ຮັບໃຊ້ວຽກຂອງອົງການປົກຄອງນະຄອນຫຼວງເອງກ່ອນ ຊຶ່ງມີທັງໝົດ 5,135 ຄັນ ໃນນັ້ນ 3,586 ຈະຖືກປ່ຽນແທນດ້ວຍຍານພາຫະນະທີ່ແລ່ນດ້ວຍພະລັງງານໄຟຟ້າ ແລະ ສ່ວນໜຶ່ງຈະເປັນລົດໄຮບຼິດ. ເຊອູນ ເປັນນະຄອນຫຼວງທີ່ໃຫ່ຍ ແລະ ມີປະຊາກອນດົກທີ່ສຸດຂອງປະເທດ. ນອກຈາກຈະຖອດປະຈໍາການລົດນໍ້າມັນກາຊວນແລ້ວ ທາງອົງການປົກຄອງຍັງມີແຜນຮ່ວມມື ແລະ ຊຸກຍູ້ບັນດາອຸດສາຫະກໍາຜະລິດລົດ ໃຫ້ຜະລິດລົດໃຊ້ພະລັງງານສະອາດສໍາລັບຂະແໜງການສະເພາະເຊັ່ນ ລົດມອດໄຟ, ລົດເຮັດອະນາໄມ ແລະ ລົດພະຍາບານ. ລົດ 3 ປະເພດນີ້ ໃນປັດຈຸບັນຍັງໃຊ້ນໍ້າມັນກາຊວນ, ເປັນລົດໜັກ ແລະ ປ່ອຍມົນລະພິດເປັນຈໍານວນຫຼວງຫຼາຍ. ຕໍ່ຈາກນັ້ນ, ທາງອົງການປົກຄອງນະຄອນຫຼວງແຫ່ງນີ້ ຍັງມີແຜນປ່ຽນລົດໂດຍສານ ປະເພດແທັກຊີ, ລົດຕູ້ໂດຍສານ ຕະຫຼອດຮອດລົດທີ່ຮັບໃຊ້ໂຮງຮຽນ ແລະ ພາກສ່ວນເອກະຊົນຕ່າງໆ ໃຫ້ກາຍເປັນລົດທີ່ແລ່ນດ້ວຍພະລັງງານສະອາດທັງໝົດ. ສ່ວນຢູ່ປະເທດນິວຊີແລນນັ້ນ, ມີຂ່າວອ່າວແປກ ອອກມາວ່າ ທາງການຂອງປະເທດນີ້ ມີແຜນກໍາຈັດມົນລະພິດທີ່ເກີດຈາກຟາມລ້ຽງສັດ. ນິວຊີແລນ ມີປະຊາກອນ 5 ລ້ານຄົນ ແຕ່ມີງົວນົມຈໍານວນ 10 ລ້ານໂຕ ແລະ ມີແກະຫຼາຍກວ່າ 26 ລ້ານໂຕ . ສຸດທ້າຍ ນັກວິທະຍາສາດຂອງປະເທດນີ້ກໍໄດ້ຄົ້ນພົບວ່າ ເມື່ອເວລາສັດປະເພດນີ້ເອື້ອມ ຫຼື ປ່ອຍລົມອອກມາ ກໍຈະມີແກັສ ມີເທນ (Methane) ເຈືອປົນຢູ່. ສ່ວນຢູ່ນໍ້າຍ່ຽວຂອງພວກມັນນັ້ນ ກໍມີແກັສໄນຕູຼດອອກຊາຍ (Nitrous Oxide) ເຈືອປົນ, ແກັສທັງ 2 ປະເພດນີ້ ມີສ່ວນເຮັດໃຫ້ໂລກຮ້ອນ. ດັ່ງນັ້ນ ທາງການຈຶ່ງໄດ້ປັບຂຶ້ນພາສີຟາມລ້ຽງສັດປະເພດນີ້ ເພື່ອໃຫ້ເຈົ້າຂອງຟາມຫັນໄປໃຊ້ກໍາມະວິທີໃໝ່ໃນການລ້ຽງສັດ ເພື່ອບໍ່ໃຫ້ມີແກັສ Methane ແລະ Nitrous Oxide ປົນຢູ່ລົມປາກ ແລະ ນໍ້າຍ່ຽວຂອງສັດລ້ຽງ.




## ຮື້ສິ້ນຂຶ້ນ

#ບ່າວກະບື

ທ້າວ ສີເຈີດ ໂດຍສານໃນລົດເມທີ່ແອອັດ. ລາວມີຮູບຂະໜາດຕິດບັດປະຈໍາໂຕແຜ່ນໜຶ່ງຕິດຕົວໄປນໍາ (ເພື່ອຕິດໃບຄໍາຮ້ອງເຂົ້າຮຽນໃຫ້ລູກຊາຍ). ບັງເອີນຮູບແຜ່ນນັ້ນພັດຕົກອອກຈາກຖົງຂອງລາວ. ລາວເລີ່ມຊອກຫາຮູບແຜ່ນນັ້ນດ້ວຍອາການກະວົນກະວາຍ ແລະ ພົບຢູ່ພື້ນ. ລາວຂໍຮ້ອງດ້ວຍຄວາມສຸພາບນໍາຍິງໜຸ່ມໃນຊຸດສິ້ນລ່ອມໆວ່າ: "ກະລຸນາຮື້ສິ້ນເຈົ້າຂຶ້ນແດ່... ຂ້ອຍຕ້ອງການເອົາຮູບ!".

## ROLL OF THE SKIRT

#BAOKBU

Sychert was travelling in a crowded bus. He was carrying an ID card - size photograph of his son ( for cshool admission ). Accidentally, the photograph fell out of his pocket.

He started searching for it frantically and found it on the floor of the bus.

Politety he asked the young woman in a long sinh (Lao skirt) "kaloona Hu Sinh Khun, Khoy Tongkan ao Hoob!" (Please roll up your skirt, i want to take the picture).

## ອ່ານມ່ວນ ຊວນຍິ້ມ




● ໂດຍ : ພູຜາ

ທະນາຄານພັດທະນາລາວ LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈໍາກັດ LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈໍາກັດຜູ້ດຽວ EPL GROUP SOLE CO.,LTD

ຜູ້ຊີ້ນໍາ : ທ່ານ ສິງຄໍາ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ : ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄໍາຫວັນ ດາລາວົງ

ຄະນະບັນນາທິການ : ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄໍາ ລໍຄໍາສອນ ຮອງ

ກອງບັນນາທິການ : ນາງ ກົງໃຈ ແສງອໍາພັນ;
ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ : ນາງ ນິດຕາ ຄຸນປາກດີ

: www.na.gov.la; : ຂ່າວ "ຜູ້ແທນປະຊາຊົນ" Phouthen Pasaxon News; : Lao NA Media; APP: Lao NA.